ພະຍາກອນ ອຽງຈັນ
19–27°C
ວັນອັງຄານ 10/11 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນອັງຄານ 10 ພະຈິກ 2026 · ສະບັບທີ 018 | ສະຫຼຸບຂ່າວປະຈຳວັນຈັນ 9 ພະຈິກ 2026 · 24 ຂ່າວ | 21 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວຕ່າງປະເທດ** · 10:33 ໂມງ · ອ່ານ 20 ຄັ້ງ

ເຫດລະທຶກ! ເຮືອບິນ Air France ບິນລ້ຽວຜິດເສັ້ນທາງ ຫວິດເກືອບຕຳກັບເຄື່ອງບິນ American Airlines ກາງອາກາດ



ເກີດເຫດເຮືອບິນໂດຍສານ Airbus A350-900 ຂອງສາຍການບິນ Air France ແລະ Airbus A321-200 ຂອງສາຍການບິນ American Airlines ຫວິດຕຳກັນກາງອາກາດ ບໍ່ດົນຫຼັງຈາກທະຍານຂຶ້ນຈາກສະໜາມບິນນານາຊາດ Los Angeles (LAX) ປະເທດສະຫະລັດ ໃນວັນທີ 7 ພະຈິກ 2026.

ເຫດການເກີດຂຶ້ນຫຼັງຈາກມີລາຍງານວ່າ ເຮືອບິນ Air France ໄດ້ລ້ຽວຊ້າຍອອກນອກເສັ້ນທາງທະຍານຂຶ້ນທີ່ໄດ້ຮັບມອບໝາຍ ເຮັດໃຫ້ຫໍບັງຄັບການ

ຕໍ່ໜ້າ 2

◆ **ເຫດການ** · 11:02 ໂມງ

ກັກຕົວຄົນສັນຊາດຍີ່ປຸ່ນ ຈຳນວນ 16 ຄົນ ກໍ່ອາຊະຍາກຳທາງອິນເຕີເນັດ



ໃນອາທິດຜ່ານມາກຳລັງເຈົ້າໜ້າທີ່ໜ່ວຍສະເພາະກິດກະຊວງປ້ອງກັນຄວາມສະຫງົບ ໄດ້ບຸກເຂົ້າມ້າງກຸ່ມແກ້ງກໍ່ອາຊະຍາກຳທາງອິນເຕີເນັດ ເຊິ່ງໃຊ້ສະຖານທີ່ເຮືອນໃຫ້ເຊົ່າຕັ້ງຢູ່ບ້ານນາລ້ອມ ເມືອງໄຊທານີ ນະຄອນຫຼວງວຽງຈັນ ເປັນບ່ອນກະທຳຜິດ.

ຜ່ານການກວດກາ ຂອງເຈົ້າໜ້າທີ່ສາມາດກັກຕົວຜູ້ຖືກຫາ ເປັນຄົນສັນຊາດ ຍີ່ປຸ່ນ ຈຳນວນ 16 ຄົນ, ພ້ອມທັງກວດພົບ ແລະ ຍຶດຂອງກາງທີ່ຖືກນຳໃຊ້ເຂົ້າໃນການກະທຳຜິດປະກອບມີ ໂທລະສັບມືຖື 55 ເຄື່ອງ ແລະ ໄອແພັດ 4 ເຄື່ອງ.

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວຕ່າງປະເທດ
3 ຂ່າວພາຍໃນ
8 ເຫດການ
9 ທ່ອງທ່ຽວ
9 ສາລະໜ້າຮູ້
20 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
21 ທ້າຍສະບັບ



◆ **ຂ່າວພາຍໃນ** · 11:24 ໂມງ

ຂ່າວດີ! ລາບລາວ ກຳລັງຈະໄດ້ຂຶ້ນທະບຽນຮັບຮອງເປັ...

ອ່ານໜ້າ 3 ▸



◆ **ຂ່າວຕ່າງປະເທດ** · 10:12 ໂມງ

ທຣຳຢືນຢັນ “ເປັນໄປໄດ້ໜ້ອຍຫຼາຍ” ທີ່ຈະໂຈມຕີອີຣານຮອບໃ...

ອ່ານໜ້າ 10 ▸



◆ **ຂ່າວພາຍໃນ** · 09:20 ໂມງ

ຮອງນາຍົກ ລັດຖະມົນຕີ, ລັດຖະມົນຕີກະຊວງ...

ອ່ານໜ້າ 3 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ເຫດລະທຶກ! ເຮືອບິນ Air France ບິນລົ້ຽວຜິດເສັ້ນທາງ ຫາອີ... (ຕໍ່ຈາກໜ້າ 1)

ບິນ (ATC) ຕ້ອງຮີບອອກຄຳສັ່ງໃຫ້ນັກບິນຂອງເຮືອບິນທັງສອງລຳປັບທິດທາງທັນທີ.

ເຫດການເກີດຂຶ້ນເວລາປະມານ 08:15 ໂມງ UTC ຫຼື 15:15 ໂມງ ຕາມເວລາລາວ. ໂດຍເຮືອບິນ Air France ຖ້ຽວບິນ AF28 ທະຍານຂຶ້ນ ເວລາປະມານ 08:15 ໂມງ UTC ຕາມດ້ວຍເຮືອບິນ American Airlines ຖ້ຽວບິນ AA1660 ໃນເວລາປະມານ 08:16 ໂມງ UTC.

ເຮືອບິນທີ່ປະສົບເຫດປະກອບມີ Airbus A350-900 ອາຍຸປະມານ 2 ປີເຄິ່ງ ໝາຍເລກທະບຽນ F-HUVK ຂອງ Air France ທີ່ບິນໄປຍັງ ສະໜາມບິນນານາຊາດ Papeete (PPT) ໃນເຂດເຟຣນຊ໌ໂພລີນີເຊຍ ແລະ Airbus A321-200 ອາຍຸເກືອບ 26 ປີ ໝາຍເລກທະບຽນ N191UW ຂອງ American Airlines ທີ່ບິນໄປຍັງ ສະໜາມບິນນານາຊາດ Dallas/Fort Worth (DFW) ລັດເທັກຊັດ.

ເຮືອບິນ Air France ຖ້ຽວບິນ AF28 ທະຍານຂຶ້ນຈາກທາງແລ່ນ 24L ຂະນະທີ່ American Airlines ຖ້ຽວບິນ AA1660 ທະຍານຂຶ້ນຈາກທາງ ແລ່ນ 25R.

ອີງຕາມຂໍ້ມູນການສື່ສານລະຫວ່າງ ນັກບິນກັບຫໍບັງຄັບການບິນ ລູກເຮືອຂອງ Air France ໄດ້ຮັບອະນຸຍາດໃຫ້ ທະຍານຂຶ້ນຕາມເສັ້ນທາງ SUMMR2 Standard Instrument Departure (SID) ເຊິ່ງເປັນເສັ້ນທາງ ບິນມາດຕະຖານທີ່ນັກບິນຕ້ອງປະຕິບັດ ຕາມຫຼັງທະຍານຂຶ້ນ.

ແຕ່ບໍ່ດົນຫຼັງຈາກທະຍານຂຶ້ນ ມີ ລາຍງານວ່າ ເຮືອບິນ A350 ລຳດັ່ງກ່າວ ໄດ້ລ້ຽວຊ້າຍຢ່າງບໍ່ຄາດຄິດ ແທນທີ່ຈະບິນ ຕໍ່ໄປຕາມເສັ້ນທາງທີ່ກຳນົດ ເຮັດໃຫ້ ເຮືອບິນລຳນີ້ເຂົ້າໃກ້ເສັ້ນທາງບິນຂອງ American Airlines A321.

ໃນເວລານັ້ນ ນັກບິນຂອງ American Airlines ແຈ້ງວ່າ ເຮືອບິນກຳລັງບິນຢູ່ລະດັບຄວາມສູງ 2,000 ຟຸດ ແລະກຳລັງໄຕ່ລະດັບຂຶ້ນໄປ ຫາ 5,000 ຟຸດ. ຫຼັງຈາກສະຖານະການ ເລີ່ມມີຄວາມສ່ຽງ ຫໍບັງຄັບການບິນຈຶ່ງສັ່ງ ໃຫ້ນັກບິນຮັກສາລະດັບຄວາມສູງ 2,000 ຟຸດໄວ້ກ່ອນ.

ລາຍງານເບື້ອງຕົ້ນທີ່ອ້າງອີງຂໍ້ມູນ ຕິດຕາມເສັ້ນທາງບິນ ລະບຸວ່າ ເຮືອບິນ ທັງສອງລຳມີລະຍະຫ່າງກັນໃນແນວຕັ້ງພຽງ ປະມານ 400 ຟຸດ ຫຼື 121 ແມັດເທົ່ານັ້ນ.

ຫໍບັງຄັບການບິນໄດ້ເຂົ້າແຊກແຊງ ທັນທີ ຫຼັງກວດພົບສະຖານະການທີ່ອາດ ນຳໄປສູ່ການຕຳກັນ ໂດຍສັ່ງໃຫ້ນັກບິນ Air France ລ້ຽວປ່ຽນທິດທາງໄປທີ່ 270 ອົງສາທັນທີ.

ຂະນະດຽວກັນ ເຮືອບິນ American Airlines ຖ້ຽວບິນ AA1660 ກໍໄດ້ຮັບສັນຍານເຕືອນວ່າມີ ເຮືອບິນອີກລຳຢູ່ທາງໜ້າໃນທິດ 12 ໂມງ ໃນໄລຍະຫ່າງບໍ່ຮອດ 1 ໄມລ໌.

ນັກບິນ American Airlines ໄດ້ຮັບຊາບຄຳສັ່ງໃຫ້ຮັກສາລະດັບຄວາມ ສູງ 2,000 ຟຸດ ແລະຢືນຢັນວ່າຈະຫຼຸດ ອັດຕາການໄຕ່ລະດັບຂຶ້ນ ເພື່ອປະຕິບັດ ຕາມຄຳສັ່ງຂອງຫໍບັງຄັບການບິນ.

ຫຼັງຈາກຄວບຄຸມສະຖານະການໄດ້ ແລ້ວ ນັກບິນ Air France ໄດ້ຮັບ ຄຳສັ່ງໃຫ້ບິນກົງໄປຍັງຈຸດ DART ແລະ ກັບໄປໄຕ່ລະດັບຕາມເສັ້ນທາງ SID ທີ່ໄດ້ ຮັບມອບໝາຍ.

ໃນການສື່ສານທາງວິທະຍຸຫຼັງຈາກ ນັ້ນ ເຈົ້າໜ້າທີ່ຫໍບັງຄັບການບິນໄດ້ ສອບຖາມນັກບິນ Air France ກ່ຽວກັບຄຳອະນຸຍາດໃນການທະຍານຂຶ້ນ ເຊິ່ງນັກບິນໄດ້ຢືນຢັນວ່າ ຕົນໄດ້ຮັບຄຳສັ່ງ ໃຫ້ບິນຕາມເສັ້ນທາງ SUMMR2.

ຕໍ່ມາ ເຈົ້າໜ້າທີ່ໄດ້ແຈ້ງໃຫ້ນັກບິນ ຮັບຊາບວ່າ ອາດມີກໍລະນີການບິນບ່ຽງ ເບນຈາກຄຳສັ່ງ (Pilot Deviation) ພ້ອມທັງໃຫ້ໝາຍເລກໂທລະສັບເພື່ອຕິດຕໍ່ ຊີ້ແຈງລາຍລະອຽດພາຍຫຼັງ.

ຫຼັງຈາກຫໍບັງຄັບການບິນເຂົ້າແຊກ ແຊງເຮືອບິນທັງສອງລຳສາມາດເດີນທາງ ຕໍ່ໄປໄດ້ຢ່າງປອດໄພ.

ໂດຍເຮືອບິນ American Airlines ຖ້ຽວບິນ AA1660 ໄດ້ຮັບ ອະນຸຍາດໃຫ້ໄຕ່ລະດັບຄວາມສູງຂຶ້ນໄປທີ່ 17,000 ຟຸດ ພ້ອມກຳນົດຄວາມໄວບໍ່ ເກີນ 250 ນ໊ອດ. ສ່ວນເຮືອບິນ Air France A350 ກໍສາມາດບິນຕໍ່ໄປຍັງ ເຟຣນຊ໌ໂພລີນີເຊຍໄດ້ຕາມປົກກະຕິ.

ເຫດການຄັ້ງນີ້ບໍ່ມີລາຍງານ ຜູ້ບາດເຈັບ ຫຼືຄວາມເສຍຫາຍຕໍ່ເຮືອບິນ ແຕ່ຢ່າງໃດ.

ຈົນເຖິງວັນທີ 8 ພະຈິກ 2026 ຍັງບໍ່ມີການເປີດເຜີຍຜົນການສືບສວນຢ່າງ ເປັນທາງການ ຫຼືຄຳອະທິບາຍທີ່ຢືນຢັນ ແນ່ນອນວ່າ ເປັນຫຍັງເຮືອບິນ Air France ຈຶ່ງລ້ຽວອອກນອກເສັ້ນທາງທີ່ ກຳນົດ. ສາເຫດຂອງເຫດການຍັງບໍ່ມີ ລາຍງານຄວາມຊັດເຈນເທື່ອ.

ທີ່ມາ: aerotime

ภัักต๊อถึบสัับชาถปี่ปุ่น จำนอน 16 ถึบ ก๊อาซุะยาทำหาๆอิบ... (ต่ำจาภน้า 1)

ปัดจຸบัน, ເຈົ້າໜ້າທີ່ວິຊາສະເພາະ ກຳລັງເລັ່ງດຳເນີນການສືບສວນ-ສອບສວນ ເພື່ອຂະຫຍາຍຜົນຫາຜູ້ຮ່ວມຂະບວນການ ແລະ ພັກພວກມາດຳເນີນຄະດີຕາມ ກົດໝາຍ.

ທີ່ມາ: ຄວາມສະຫງົບ Lao Security News

ຮັບ ມະຫາສານ ລາຍວັນ ทางอีเมอ ฟรี

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ทุกเช้า ก่อนเข้าอฐก. สะแกน QR หื เข้า mahaxan.com/newspaper

ลิ้งโถสะบา ใบ มะหาสาน ลายอัน

ໜັງສືພິມ PDF ปะจำอัน · จอๆเป้นลายอัน, ลายอาทิด หื ลายเดือน · ทิมๆานออกแบบให้ฟรี

โถสะบา

WhatsApp 020 5888 6182

◆ ຂ່າວພາຍໃນ · 11:24 ໂມງ · ອ່ານ 14 ຄັ້ງ

ຂ່າວດີ! ລາບລາວກຳລັງຈະໄດ້ຂຶ້ນທະບຽນຮັບຮອງເປັນມໍລະດົກວັດທະນະທຳຂອງ ສປປ ລາວ ໂດຍ UNESCO!



ລາບລາວ ບໍ່ແມ່ນພຽງແຕ່ອາຫານ ແຕ່ແມ່ນມໍລະດົກທາງວັດທະນະທຳ ທີ່ສະທ້ອນເຖິງຕົວຕົນ, ວິຖີຊີວິດ ແລະ ເອກະລັກຂອງຄົນລາວ

ໂດຍໃນວັນທີ 5 ພະຈິກ 2026 ສະມາຄົມນັກທຸລະກິດຍິງລາວ ລາຍງານວ່າ: ໄດ້ຮັບອີເມວຈາກອົງການ UNECO ກຳລັງລໍຖ້າຂ່າວດີໃນການປະກາດຮັບຮອງເອົາ "ລາບ" ເປັນມໍລະດົກໂລກຂອງ ສປປ ລາວ ຈາກອົງການ UNESCO ໃນຢ່າງເປັນທາງການໄວໆນີ້ ເຊິ່ງຈະເປັນຂ່າວດີຂອງຄົນລາວເປັນຄວາມພາກພູມໃຈຂອງພໍ່ແມ່ພີ່ນ້ອງຊາວລາວ.

ລາບລາວ ຫລື ຊື່ທາງການແມ່ນ Larb: a culinary symbol of Lao cultural identity ອາຫານປະຈຳຊາດທີ່ສະທ້ອນເຖິງເອກະລັກ ວິຖີຊີວິດ ແລະ ວັດທະນະທຳຂອງຄົນລາວ ກຳລັງກ້າວສູ່ການຮັບຮອງເປັນມໍລະດົກວັດທະນະທຳນາມມະທຳຂອງມວນມະນຸດຊາດ ໂດຍອົງການ UNESCO.

ລາບບໍ່ແມ່ນພຽງແຕ່ອາຫານທີ່ມີລົດຊາດເປັນເອກະລັກ ແຕ່ຍັງສື່ເຖິງຄວາມເຊື່ອເລື່ອງໂຊກລາບ ຄວາມເປັນສີລິມົງຄຸນ ແລະ ຄວາມສາມັກຄີຂອງຄອບຄົວແລະຊຸມຊົນລາວ.

ການຜັກດັນລາບລາວສູ່ການຂຶ້ນທະບຽນຄັ້ງນີ້ ຖືເປັນອີກກ້າວສຳຄັນໃນການອະນຸລັກ ແລະ ເຜີຍແຜ່ມໍລະດົກອັນລ້ຳຄ່າຂອງລາວໃຫ້ເປັນທີ່ຮູ້ຈັກໃນລະດັບສາກົນ.

ລາບບໍ່ແມ່ນພຽງແຕ່ອາຫານທີ່ມີລົດຊາດເປັນເອກະລັກ ແຕ່ຍັງສະທ້ອນເຖິງຮາກເຫງົ້າທາງວັດທະນະທຳ ປະເພນີ ແລະ ຄວາມຜູກພັນຂອງຄົນລາວ. ໂດຍສະເພາະຄວາມໝາຍຂອງຄຳວ່າ “ລາບ” ທີ່ສື່ເຖິງໂຊກລາບ ຄວາມເປັນສີລິມົງຄຸນ ແລະ ຄວາມເຈົ້າລາບເຈົ້າຄຸນ ຈຶ່ງນິຍົມນຳມາປຸງແຕ່ງໃນງານບຸນ ງານມຸງຄຸນ ງານລ້ຽງສັງສັນ ລວມເຖິງການຕ້ອນຮັບແຂກຄົນສຳຄັນ.

ຄວາມພິເສດຂອງລາບລາວຍັງຢູ່ທີ່ສູດການປຸງແຕ່ງ ແລະ ວັດຖຸດິບທ້ອງຖິ່ນທີ່ມີຄວາມຫຼາກຫຼາຍ ບໍ່ວ່າຈະເປັນລາບຊີ້ນງົວ ລາບຊີ້ນຄວາຍ ລາບໝູ ຫຼື ລາບປາ ເຊິ່ງແຕ່ລະທ້ອງຖິ່ນກໍມີເອກະລັກ ແລະ ລົດຊາດສະເພາະຂອງຕົນເອງ ທັງການໃຊ້ເຄື່ອງປຸງ ຜັກສົດ ເຂົ້າຂົ້ວ ໝາກເຜັດ ແລະ ສະໝຸນໄພຕ່າງໆ ທີ່ປະສົມປະສານກັນຢ່າງລົງຕົວ.

ນອກຈາກຄຸນຄ່າດ້ານອາຫານແລ້ວ ລາບຍັງເປັນສື່ກາງໃນການສ້າງຄວາມສຳພັນຂອງຄົນໃນຄອບຄົວ ແລະ ຊຸມຊົນ. ການຮ່ວມກັນກະກຽມອາຫານ ຮ່ວມກັນກິນ ແລະ ແບ່ງປັນລາບໃນງານສຳຄັນ ຖືເປັນພາບສະທ້ອນຂອງນ້ຳໃຈ ຄວາມອົບອຸ່ນ ແລະ ຄວາມສາມັກຄີຂອງຄົນລາວ.

ການຜັກດັນລາບລາວໃຫ້ເປັນທີ່ຮູ້ຈັກໃນລະດັບສາກົນ ຈຶ່ງບໍ່ພຽງແຕ່ເປັນການສົ່ງເສີມອາຫານປະຈຳຊາດ ແຕ່ຍັງເປັນການອະນຸລັກພູມປັນຍາທ້ອງຖິ່ນ ສືບສານປະເພນີຈາກຄົນຮຸ່ນໜຶ່ງສູ່ຄົນອີກຮຸ່ນໜຶ່ງ ແລະ ເປີດໂອກາດໃຫ້ຊາວໂລກໄດ້ຮູ້ຈັກອັດລັກຂອງປະເທດລາວຫຼາຍຂຶ້ນ.

ດັ່ງນັ້ນ ຄົນລາວທຸກຄົນຈຶ່ງສາມາດມີສ່ວນຮ່ວມໃນການສົ່ງເສີມມໍລະດົກອັນລ້ຳຄ່ານີ້ ດ້ວຍການຮ່ວມກັນເຜີຍແຜ່ຮຸບພາບເລື່ອງລາວ ແລະ ຄຸນຄ່າຂອງລາບລາວຜ່ານສື່ສັງຄົມ ເພື່ອໃຫ້ອາຫານທີ່ເປັນຄວາມພູມໃຈຂອງຊາດ ໄດ້ກ້າວໄປສູ່ສາຍຕາຂອງຄົນທົ່ວໂລກ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ຂ່າວພາຍໃນ · 09:20 ໂມງ · ອ່ານ 13 ຄັ້ງ

ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ສຳເລັດການຢ້ຽມຢາມ ສ ເບລາຣຸດຊີ



ໂດຍຕອບສະໜອງຕາມການເຊື້ອເຊີນຂອງ ທ່ານ ມາກຊິມ ຣີເຊັ້ນກົບ (Maxim Ryzhenkov) ລັດຖະມົນຕີກະ ຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ເບລາຣຸດຊີ, ທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງ ການຕ່າງປະເທດ ແຫ່ງ ສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມດ້ວຍພັນລະຍາ ແລະ ຄະນະ ໄດ້ ເດີນທາງຢ້ຽມຢາມ ສາທາລະນະລັດ ເບ ລາຣຸດຊີ ຢ່າງເປັນ ທາງການ ໃນວັນທີ 4-6 ພະຈິກ 2026 ທີ່ນະຄອນຫຼວງ ມິນສກ໌, ຊຶ່ງເປັນການຢ້ຽມຢາມ ສ ເບລາຣຸດຊີ ຢ່າງເປັນ ທາງການ ຄັ້ງທຳອິດ ຂອງ ທ່ານ ທອງສະ ຫວັນ ພົມວິຫານ ພາຍຫລັງດຳລົງຕຳແໜ່ງເປັນຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ.

ຈຸດປະສົງຂອງການຢ້ຽມຢາມ ທາງການຄັ້ງນີ້ ແມ່ນເພື່ອສືບຕໍ່ຮັດແໜ້ນ, ເສີມຂະຫຍາຍສາຍພົວພັນມິດຕະ ພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີ ງາມມາແຕ່ດົນນານ, ນັບແຕ່ສະໄໝສະຫະ ພາບໂຊວຽດ ກໍຄື ນັບແຕ່ສອງຝ່າຍ ໄດ້ສ້າງ ຕັ້ງສາຍພົວພັນການທູດນຳກັນໃນປີ 1994 ເປັນຕົ້ນມາ, ສອງຝ່າຍ ໄດ້ປຶກສາ ຫາລືກັນ ໃນຫຼາຍຂົງເຂດວຽກງານເພື່ອ ເປັນການສືບຕໍ່ຜັນຂະຫຍາຍຜົນການ ພົບປະສອງຝ່າຍຂອງສອງປະມຸກລັດ ລາວ ແລະ ເບລາຣຸດຊີ ໃນໄລຍະຜ່ານມາ ໃຫ້ມີ ໝາກຜົນເປັນຮູບປະທຳ.

ໃນໂອກາດການຢ້ຽມຢາມຄັ້ງນີ້, ທ່ານ ທອງສະຫວັນ ພົມວິຫານ ຮອງ ນາຍົກລັດຖະມົນຕີ ລັດຖະມົນຕີກະຊວງ ການຕ່າງປະເທດ ແຫ່ງ ສປປ ລາວ ໄດ້ ພົບປະສອງຝ່າຍຢ່າງເປັນທາງການ ກັບ ທ່ານ ມາກຊິມ ຣີເຊັ້ນກົບ ລັດຖະ ມົນຕີ ກະ ຊວງ ການ ຕ່າງ ປະ ເທດ ແຫ່ງ ສາທາລະນະລັດ ເບ ລາຣຸດຊີ ໃນວັນທີ 5 ພະຈິກ 2026 ທີ່ກະຊວງການຕ່າງ ປະເທດ ແຫ່ງ ສ ເບລາຣຸດຊີ, ຊຶ່ງ ສອງ ຝ່າຍ ໄດ້ທົບທວນຄືນ ແລະ ຕີລາຄາສູງຕໍ່ ການພົວພັນຮ່ວມມືສອງຝ່າຍ ໃນໄລຍະ ຜ່ານມາ ນັບຕັ້ງແຕ່ສອງປະເທດໄດ້ສ້າງຕັ້ງ ສາຍພົວພັນການຮ່ວມກັນ ໃນວັນທີ 7 ກຸມພາ 1994 ໂດຍສະ ເພາະທາງດ້ານ ການເມືອງ ທີ່ໄດ້ຮັບການເສີມຂະຫຍາຍ ຢ່າງຕໍ່ເນື່ອງ ບົນພື້ນຖານການເຄົາລົບນັບຖື, ໄວ້ເນື້ອເຊື່ອ ໃຈ ແລະ ການ ສະໜັບສະໜູນ ເຊິ່ງກັນ ແລະ ກັນ ໃນ ເວທີພາກພື້ນ ແລະ ສາກົນ. ສອງຝ່າຍ ເຫັນດີສືບຕໍ່ຊຸກຍູ້ການແລກປ່ຽນການ ຢ້ຽມຢາມ ເຊິ່ງກັນ ແລະ ກັນ ຂອງຄະນະ ຜູ້ແທນໃນຫລາຍລະດັບໃຫ້ເປັນປົກກະຕິ.

ນອກຈາກນັ້ນ, ສອງຝ່າຍ ຍັງໄດ້ ປຶກສາຫາລື ກ່ຽວກັບການຮ່ວມມືທາງດ້ານ ເສດຖະກິດ, ການຄ້າ, ການລົງທຶນ, ກະສິ ກຳ, ການສຶກສາ, ສາທາລະນະສຸກ, ວັດ ທະນະທຳ, ການທ່ອງທ່ຽວ ແລະ ຂົງເຂດ ອື່ນໆທີ່ສອງຝ່າຍມີທ່າແຮງ ແລະ ມີຄວາມ ສົນໃຈຮ່ວມກັນ, ລວມທັງໄດ້ກຳນົດທິດ ທາງແຜນການຮ່ວມມືໃນຕໍ່ໜ້າ ເພື່ອຮັດ ແໜ້ນການພົວພັນການຮ່ວມມືທີ່ມີມາ ແລ້ວນັ້ນ ໃຫ້ກ້າວເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງຂຶ້ນ.

ໃນໂອກາດນີ້, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະ ແດງຄວາມຂອບໃຈ ລັດຖະບານ ແລະ ປະຊາຊົນ ເບລາຣຸດຊີ ຕໍ່ການຊ່ວຍເຫລືອ ສປປ ລາວ ໃນໄລຍະ ຜ່ານມາ ໂດຍສະເພາະ ການພັດທະນາ ຊັບພະຍາກອນມະນຸດ ຕັ້ງ ແຕ່ສະໄໝ ສະຫະພາບໂຊວຽດ ຊຶ່ງໄດ້ກາຍເປັນກຳລັງ ແຮງອັນສຳຄັນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດ ທະນາປະເທດຊາດຂອງ ສປປ ລາວ ໃນປັດຈຸບັນ.

ພາຍຫຼັງສຳເລັດການພົບປະຄົບ ຄະນະຢ່າງເປັນທາງ ການແລ້ວ, ສອງ ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແລະ ສ ເບລາຣຸດຊີ ໄດ້ ຖະແຫລງຂ່າວຮ່ວມກັນ ກ່ຽວກັບຜົນສຳ ເລັດຂອງການພົບປະສອງຝ່າຍ.

ໃນໂອກາດເຄື່ອນໄຫວຢ້ຽມຢາມ ສ ເບລາຣຸດຊີ ຢ່າງເປັນທາງການໃນຄັ້ງນີ້, ທ່ານ ທອງສະຫວັນ ພົມວິຫານ ຮອງ ນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ການຕ່າງປະ ເທດ ແຫ່ງ ສປປ ລາວ ພ້ອມ ດ້ວຍຄະນະ ຍັງໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ນາງ ນາຕາເລຍ ໂກຈາໂນວາ (Natalia Kochanova) ປະທານສະພາສູງ, ສະພາແຫ່ງຊາດ ແຫ່ງ ສ ເບລາຣຸດຊີ ແລະ ທ່ານ ອີກໍ ເຊີເກເຢັນໂກ (Igor Sergeyenko), ປະທານສະພາຜູ້ແທນ ປະຊາຊົນ, ສະພາແຫ່ງຊາດ ແຫ່ງ ສ ເບລາ ຣຸດຊີ ແລະ ພົບປະກັບ ທ່ານ ວິກເຕ ກາ ຣ ັ ນ ເ ກ ຍ ວ ິ ຈ (Viktor Karankevich) ຮ ອ ງ ນ າ ຍ ົ ກ ລັດຖະມົນຕີ ແຫ່ງ ສ ເບລາຣຸດຊີ, ຜູ້ຊີ້ນຳ ວຽກງານຂົງເຂດເສດຖະກິດ ແລະ ພະລັງງານ.

ນອກຈາກນີ້, ທ່ານ ທອງສະຫວັນ ພົມວິຫານ ໄດ້ເຂົ້າ ຮ່ວມ ແລະ ກ່າວເປີດ ກອງປະຊຸມພົບປະພາກທຸລະກິດ ລະ ຫວ່າງ ສປປ ລາວ ແລະ ສ ເບລາຣຸດຊີ ແລະ ຍັງໄດ້ໄປວາງພວງມາລາ ຢູ່ ອະນຸສາວະລີໄຊຊະນະ. ໃນຕອນທ້າຍຂອງ ການຢ້ຽມຢາມ, ຍັງໄດ້ໄປຢ້ຽມຊົມ ສະຖານທີ່ທາງປະຫວັດ ສາດ ແລະ ວັດທະນະທຳ ທີ່ສຳຄັນຂອງ ເບລາຣຸດຊີ ຈຳນວນໜຶ່ງ.

ການຢ້ຽມຢາມ ສ ເບລາຣຸດຊີ ຢ່າງ ເປັນທາງການ ຂອງ ທ່ານ ທອງສະຫວັນ ພົມວິຫານ ໃນຄັ້ງນີ້ ໄດ້ປະສົບຜົນສຳ ເລັດ ຕາມລະດັບຄາດໝາຍ, ພ້ອມທັງໄດ້ຮັບ ການຕ້ອນຮັບຢ່າງອົບອຸ່ນ ແລະ ດຳ ເນີນ ໄປຢ່າງສົມກຽດແຕ່ຕົ້ນຈົນຈົບ. ພ້ອມກັນ ນັ້ນ, ການເດີນທາງຢ້ຽມຢາມຄັ້ງນີ້ ຍັງໄດ້ ປະ ກອບສ່ວນສຳຄັນເຂົ້າໃນການເພີ່ມພູນ ຄູນສ້າງ ແລະ ເສີມຂະຫຍາຍສາຍພົວພັນ ມິດຕະພາບທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສປປ ລາວ ແລະ ສ ເບລາຣຸດຊີ ໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ ຂ່າວພາຍໃນ · 13:46 ໂມງ · ອ່ານ 11 ຄັ້ງ

ລາວ-ຈີນ ຫາລືແຜນການຮ່ວມມືຍຸດທະສາດດ້ານການສຶກສາ



ວັນທີ 4 ພະຈິກ 2026 ທີ່ສຳນັກງານກະຊວງສຶກສາທິການ ແລະ ກີລາ, ທ່ານ ຣສ.ປອ ທອງສະລິດ ມັງໜໍ່ ເມກ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ສຈ.ປອ ນາງ ເຫວີຍສີເຈີນ ຜູ້ອຳນວຍການໃຫຍ່ ມະຫາວິທະຍາໄລຊິນເຜີ່ກວາງຊີ ສປ ຈີນ ເພື່ອເຂົ້າຢ້ຽມຢາມ ແລະ ປຶກສາຫາລືກ່ຽວກັບແຜນການຮ່ວມມືຍຸດທະສາດລະຫວ່າງສອງປະເທດ ລາວ - ຈີນ ໂດຍມີຫົວໜ້າກົມ, ຮອງກົມ, ຫົວໜ້າສະຖາບັນຂົງຈື ມະຫາວິທະຍາໄລແຫ່ງຊາດ ຝ່າຍລາວ ແລະ ຝ່າຍຈີນ ພ້ອມດ້ວຍຄະນະທີ່ກ່ຽວຂ້ອງທັງສອງຝ່າຍເຂົ້າຮ່ວມ.

ໃນພິທີ ທັງສອງຝ່າຍໄດ້ຕີລາຄາສູງເຖິງສາຍພົວພັນການຮ່ວມອັນດີງາມລະຫວ່າງສອງປະເທດ ລາວ-ຈີນ ທີ່ມີມາແຕ່ດົນນານ ພ້ອມທັງປຶກສາຫາແຜນການຮ່ວມຫຼາຍດ້ານ ເປັນຕົ້ນການຮ່ວມມືທາງດ້ານການສ້າງຫຼັກສູດພາສາຈີນ ເຂົ້າໃນຊັ້ນມັດທະຍົມຂອງ ສປປ ລາວ; ການຮ່ວມມືດ້ານຊັບພະຍາກອນມະນຸດ ລາວ-ຈີນ ເຊິ່ງຝ່າຍຈີນຈະຝຶກອົບຮົມບຸກຄະລາກອນຜູ້ຈັດການ ແລະ ວິຊາຊີບພາກວິຊາການ 3,000 ຄົນໃຫ້ແກ່ລາວ ຮອດປີ 2028, ບັນລຸເປົ້າໝາຍໃຫ້ນັກຮຽນລາວ 10,000 ຄົນເຂົ້າຮຽນຢູ່ຈີນທຸກໆປີ, ຂະຫຍາຍການຮ່ວມມືແລກປ່ຽນລະຫວ່າງສອງຝ່າຍ ໃນຂະແໜງການສຶກສາຊັ້ນສູງ, ການສຶກສາວິຊາຊີບ, ການສຶກສາພາສາ, ການສຶກສາດ້ານດິຈິຕອນ ແລະ ປັນຍາປະດິດ ແລະ ຂະແໜງອື່ນໆໃຫ້ສຳເລັດ. ຝ່າຍຈີນຈະສືບຕໍ່ສະໜອງທຶນການສຶກສາໃຫ້ນັກຮຽນລາວທີ່ດີເດັ່ນເພື່ອເຂົ້າຮຽນຢູ່ຈີນ, ຝຶກຝົນບຸກຄະລາກອນທີ່ມີຄຸນນະພາບສູງໃນຂະແໜງການຮ່ວມມືສຳຄັນຂອງສອງຝ່າຍ. ສອງຝ່າຍຮ່ວມມືຍົກລະດັບຄວາມສາມາດໃນການນຳໃຊ້ເຕັກໂນໂລຊີດິຈິຕອນຂອງພະນັກງານລັດຖະກອນ ແລະ ປະຊາຊົນທົ່ວໄປຂອງລາວ, ຫຼຸດຜ່ອນຄວາມແຕກຕ່າງດ້ານດິຈິຕອນ, ສ້າງເງື່ອນໄຂທີ່ດີໃຫ້ລາວກ້າວໄປສູ່ສັງຄົມດິຈິຕອນ. ຝ່າຍຈີນຍິນດີຕາມຄວາມຕ້ອງການຂອງຝ່າຍລາວ, ສືບຕໍ່ສະໜັບສະໜຸນລາວຍົກລະດັບການສຶກສາ ດ້ວຍວິທີການປະສົມປະສານລະຫວ່າງການຊ່ວຍເຫຼືອດ້ານວັດຖຸ ແລະ ດ້ານຊອບແວ, ສະໜັບສະໜຸນລາວສ້າງ ປຶ້ມແບບຮຽນຊັ້ນປະຖົມ ແລະ ມັດທະຍົມ.

ໂອກາດນີ້, ທ່ານ ສຈ.ປອ ນາງ ເຫວີຍສີເຈີນ ໄດ້ລາຍງານເຖິງຄວາມຄືບໜ້າການສ້າງໂຄງຮ່າງຫຼັກສູດພາສາຈີນສຳລັບຊັ້ນມັດທະຍົມ, ການຈັດຕັ້ງປະຕິບັດໂຄງການສ້າງໂຮງຮຽນ 67 ສະໃໝໃໝ່ຢູ່ ສປປ ລາວ, ການຜັນຂະຫຍາຍ ຖະແຫຼງການຮ່ວມກັນ ປີ 2026ໃນມາດຕາທີ 24, ມະຫາວິທະຍາໄລຊິນເຜີ່ກວາງຊີ ຍິນດີທີ່ຈະຮ່ວມມືກັບທາງຝ່າຍລາວ ໂດຍສະເພາະມະຫາວິທະຍາໄລແຫ່ງຊາດ ກໍຄືກະຊວງສຶກສາທິການ ແລະ ກີລາ ໃນການຜັນຂະຫຍາຍໂຄງການດັ່ງກ່າວ ໂດຍສະເພາະເລື່ອງການສົ່ງບຸກຄະລາກອນນັກຮຽນ ນັກສຶກສາໄປຮ່ຳຮຽນ ຫຼືຍົກລະດັບ,ຝຶກອົບຮົມ ຢູ່ ສປ ຈີນ ໃນໂຄງການຈາກ 3,000 ຄົນ ຮອດປີ 2028 ໃຫ້ເປັນ 10,000 ຄົນທີ່ລະບຸໃນມະຕິທີ 24, ວຽກງານການປັບປຸງຫ້ອງຄົ້ນຄວ້າ-ທົດລອງ ຢູ່ ມຊ ເພື່ອຍົກລະດັບໃຫ້ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການສຶກສາທີ່ຕ້ອງໄປຄຽງຄູ່ກັບການຄົ້ນຄວ້າ ແລະທົດລອງ. ເຊິ່ງທາງຝ່າຍ ສປ ຈີນ ໄດ້ສະແດງຄວາມພ້ອມ ເຕັມທີ່ທີ່ຈະສືບຕໍ່ສະໜັບສະໜຸນ ແລະ ຊ່ວຍເຫຼືອການຮ່ວມມືທາງດ້ານຕ່າງໆຕາມການສະເໜີຂອງຝ່າຍລາວ ເພື່ອໃຫ້ສາມາດຈັດຕັ້ງໄດ້ເປັນຮູບປະທຳ.

ໂອກາດດັ່ງກ່າວ, ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ສສກ ໄດ້ສະແດງຄວາມຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການຮ່ວມມືອັນແໜ້ນແຟ້ນລະຫວ່າງສອງຊາດ ລາວ-ຈີນ ໂດຍສະເພາະການຮ່ວມມືລະຫວ່າງ ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລຊິນເຜີ່ກວາງຊີ ທີ່ໄດ້ຮ່ວມມືກັນຢ່າງສະໜິດແໜ້ນ, ພ້ອມນັ້ນທ່ານຍັງໄດ້ສະແດງຄວາມຄວາມເປັນຫ່ວງ ແລະ ປຶກສາຫາລືກ່ຽວກັບວິທີການຜັນຂະຫຍາຍມະຕິທີ 24 ໃຫ້ເປັນຮູບປະທຳ ແລະມີປະສິດທິພາບ, ເນື່ອງຈາກຈຳນວນທຶນການສຶກສາມີຈຳນວນຫຼວງຫຼາຍ ເຖິງ 10,000 ທຶນ, ສະນັ້ນຂໍໃຫ້ທັງສອງມະຫາວິທະຍາໄລໃຫ້ຊ່ວຍເປັນໜຶ່ງໃນໜ່ວຍງານໃນການຈັດຕັ້ງປະຕິບັດມະຕິດັ່ງກ່າວໃຫ້ເກີດຜົນເປັນຈິງ. ນອກຈາກນັ້ນ ປັດຈຸບັນຄວາມຕ້ອງການຮຽນພາສາຈີນຢູ່ ສປປ ລາວ ມີຈຳນວນເພີ່ມຂຶ້ນຢ່າງຫຼວງຫຼາຍ, ສະເໜີໃຫ້ຝ່າຍຈີນພິຈາລະນາຊ່ວຍເຫຼືອດ້ານການພັດທະນາຄູສອນພາສາຈີນ, ການປັບປຸງຫຼັກສູດການຮຽນ-ການສອນ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືຕ່າງໆ ແລະ ຜັນຂະຫຍາຍຖະແຫຼງການຮ່ວມ ແລະ ກົນໄກຕິດຕາມເວົ້າສະເພາະ, ເວົ້າລວມກໍຄືເພື່ອຜັນຂະຫຍາຍມະຕິທີ 24 ຂອງຖະແຫຼງການຮ່ວມກັນ ທີ່ປະມຸກລັດ/ຜູ້ນຳສູງສຸດຂອງສອງປະເທດ ລາວ-ຈີນ ໃຫ້ປະກົດຜົນເປັນຮູບປະທຳຢ່າງແທ້ຈິງ.

ທີ່ມາ: ຂ່າວສຶກສາ, ວິທະຍາສາດ ແລະ ກີລາ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 10:24 ໂມງ · ອ່ານ 4 ຄັ້ງ

ສະພາແຫ່ງຊາດ ລາວ-ຫວຽດນາມ ຮັດແໜ້ນການພົວພັນຮ່ວມມືສອງຝ່າຍ



ໃນພິທີພົບປະ, ສະຫາຍປະທານສະພາແຫ່ງຊາດ ລາວ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ສົມກຽດ, ພ້ອມທັງສະແດງຄວາມຊົມເຊີຍຕໍ່ຜົນສຳເລັດອັນໃຫຍ່ຫລວງ ຂອງຫວຽດນາມ ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ ຊຶ່ງມີສະຫາຍ ເລຂາທິການໃຫຍ່ ໂຕ ເລີມ ເປັນຜູ້ນຳໜ້າ ໂດຍ ເສດຖະກິດໃນ 9 ເດືອນ ຕົ້ນປີ 2026 ສາມາດຂະຫຍາຍ ຕົວສູງເຖິງ 9,01%. ພ້ອມກັນນີ້, ຍັງໄດ້ແຈ້ງ ສະພາບການພື້ນເດັ່ນຂອງ ສປປ ລາວ ໂດຍເນັ້ນໃຫ້ເຫັນ ວ່າ ເຖິງຈະມີສິ່ງທ້າທາຍຈາກຜົນກະທົບທົ່ວໂລກ, ແຕ່ ສປປ ລາວ ຍັງຮັກສາສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ 9 ເດືອນຕົ້ນປີ 2026 ເຕີບໂຕ 4,8%, ພ້ອມທັງໄດ້ລົງເລິກການປັບປຸງກົງຈັກການຈັດຕັ້ງທັງ ສູນກາງ ແລະ ທ້ອງຖິ່ນໃຫ້ກະທັດຮັດ ແລະ ມີ ປະສິດທິພາບສູງຂຶ້ນ. ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນ ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການ ຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນ ຍຸດທະສາດ ລາວ-ຫວຽດນາມ, ລາວ-ຫວຽດນາມ ທີ່ນັບມື້ເຂົ້າສູ່ລວງເລິກ; ພ້ອມທັງທົບທວນການຮ່ວມມືຂອງສອງ ສະພາແຫ່ງຊາດໃນໄລຍະຜ່ານມາ ເປັນຕົ້ນ ການແລກປ່ຽນຄະນະຜູ້ແທນທຸກຂັ້ນ, ການສ້າງປຶ້ມປະຫວັດສາດ “50 ປີ ແຫ່ງ ການພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ” ແລະ ການສະໜັບສະໜຸນເຊິ່ງກັນ ແລະ ກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ເພື່ອສືບຕໍ່ຊຸກຍູ້ການຮ່ວມມືໃຫ້ ເປັນຮູບປະທຳຍິ່ງຂຶ້ນ, ສະຫາຍປະທານ ສະພາແຫ່ງຊາດລາວ ໄດ້ສະເໜີເນື້ອໃນ ສຳຄັນສຳລັບທິດທາງການຮ່ວມມືໃນຕໍ່ໜ້າ ເປັນຕົ້ນ ສືບຕໍ່ສົ່ງເສີມການພົບປະ ແລກປ່ຽນລະຫວ່າງສະພາປະຊາຊົນຂັ້ນ ແຂວງທີ່ມີຊາຍແດນຕິດຈອດກັນ ແລະ ຄົ້ນຄວ້າປັບປຸງປັດບັນທຶກການຮ່ວມມື (MOU) ລະຫວ່າງສອງສະພາແຫ່ງຊາດ ທີ່ ຈະສິ້ນສຸດລົງໃນປີ 2027; ກະກຽມ ສະເຫລີມສະຫລອງປີສາມັກຄີມິດຕະພາບ 2027 ວາງແຜນຈັດກິດຈະກຳຮ່ວມກັນ ເພື່ອສະເຫລີມສະຫລອງ 65 ປີ ວັນສ້າງ ຕັ້ງສາຍພົວພັນການທູດ ແລະ 50 ປີ ວັນ ເຊັນສົນທິສັນຍາມິດຕະພາບ ແລະ ການ ຮ່ວມມືລາວ-ຫວຽດ ນາມ; ການຕິດຕາມ ກວດກາໂຄງການຍຸດທະສາດ, ສະເໜີໃຫ້ ສອງສະພາແຫ່ງຊາດຕິດຕາມກວດກາ ແລະ ຊຸກຍູ້ໂຄງການເຊື່ອມຕໍ່ພື້ນຖານໂຄງ ລ່າງ ເຊັ່ນ: ເສັ້ນທາງດ່ວນວຽງຈັນ-ຮ່າໂນ້ຍ, ເສັ້ນທາງລົດໄຟວຽງຈັນ-ທ່າແຂກ-ຫວ່ຽງອາ ແລະ ທ່າເຮືອຫວ່ຽງອາ ໃຫ້ປີ 2027 ເປັນ ປີແຫ່ງການຕິດຕາມກວດກາການ ຈັດຕັ້ງ ປະຕິບັດໂຄງການເຊື່ອມຕໍ່ພື້ນຖານໂຄງລ່າງ ດ້ານການຄົມມະນາຄົມ; ການ ສະໜັບສະໜຸນບົດຮຽນຈາກຝ່າຍ ຫວຽດນາມ ກ່ຽວກັບການຄຸ້ມຄອງ ວຽກງານທ້ອງຖິ່ນ, ການນຳໃຊ້ປັນຍາ ປະດິດ (AI) ເຂົ້າໃນວຽກງານກົດໝາຍ ແລະ ການຫັນເປັນດິຈິຕອນຂອງສະພາ ແຫ່ງຊາດ.

ໂອກາດດຽວກັນນີ້, ສະຫາຍ ປະທານສະພາແຫ່ງຊາດລາວ ໄດ້ສະແດງ ຄວາມຂອບໃຈຢ່າງຈິງໃຈ ຕໍ່ການ ຊ່ວຍເຫລືອອັນລ້ຳຄ່າຈາກພັກ, ສະພາ ແຫ່ງຊາດ, ລັດຖະບານ ແລະ ປະຊາຊົນ ຫວຽດນາມ ທີ່ມີມາໂດຍຕະຫລອດ, ພ້ອມທັງເຊື້ອເຊີນສະຫາຍ ເຈີນ ແທ້ງ ເໝີ້ນ ພ້ອມດ້ວຍຄະນະໄປຢ້ຽມຢາມ ສປປ ລາວ ຢ່າງເປັນທາງການໃນເວລາທີ ເໝາະສົມ.

ຂ່າວ-ພາບ: ສພຊ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 11:02 ໂມງ · ອ່ານ 3 ຄັ້ງ

ຮອງນາຍົກລັດຖະມົນຕີ ສຳເລັດການຢ້ຽມຢາມ ສ ເບລາຣຸດຊີ



ຊຶ່ງເປັນການຢ້ຽມຢາມ ສ ເບລາຣຸດຊີ ຢ່າງເປັນທາງການຄັ້ງທຳອິດ ຂອງ ທ່ານ ທອງສະຫວັນ ພົມວິຫານ ພາຍຫລັງດຳລົງຕຳແໜ່ງເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ. ຈຸດປະສົງຂອງການຢ້ຽມຢາມ ທາງການຄັ້ງນີ້ແມ່ນເພື່ອສືບຕໍ່ຮັດແໜ້ນ, ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມມາແຕ່ດົນນານ, ນັບແຕ່ສະໄໝສະຫະພາບໂຊວຽດ ກໍຄື ນັບແຕ່ສອງຝ່າຍໄດ້ສ້າງຕັ້ງສາຍພົວພັນການທູດນຳກັນໃນປີ 1994 ເປັນຕົ້ນມາ, ສອງຝ່າຍໄດ້ປຶກສາຫາລືກັນ ໃນຫລາຍຂົງເຂດວຽກງານເພື່ອເປັນການສືບຕໍ່ຜົນຂະຫຍາຍຜົນການພົບປະສອງຝ່າຍຂອງສອງປະມຸກລັດລາວ ແລະ ເບລາຣຸດຊີ ໃນໄລຍະຜ່ານມາ ໃຫ້ມີໝາກຜົນເປັນຮູບປະທຳ.

ໃນໂອກາດການຢ້ຽມຢາມຄັ້ງນີ້, ທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ໄດ້ພົບປະສອງຝ່າຍຢ່າງເປັນທາງການ ກັບ ທ່ານ ມາກຊິມ ຣີເຊັ້ນກົບ ລັດຖະມົນຕີ ກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ເບລາຣຸດຊີ ໃນວັນທີ 5 ພະຈິກ 2026 ທີ່ກະຊວງການຕ່າງປະເທດ ແຫ່ງ ສ ເບລາຣຸດຊີ ຊຶ່ງສອງຝ່າຍໄດ້ທົບທວນຄືນ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມືສອງຝ່າຍ ໃນໄລຍະຜ່ານມາ ນັບຕັ້ງແຕ່ສອງປະເທດໄດ້ສ້າງຕັ້ງສາຍພົວພັນການທູດຮ່ວມ ກັນ ໃນວັນທີ 7 ກຸມພາ 1994 ໂດຍສະເພາະທາງດ້ານການເມືອງທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ບົນພື້ນຖານການເຄົາລົບນັບຖື, ໄວ້ເນື້ອເຊື່ອໃຈ ແລະ ການສະໜັບສະໜຸນເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ. ສອງຝ່າຍເຫັນດີສືບຕໍ່ຊຸກຍູ້ການແລກປ່ຽນການຢ້ຽມຢາມ ເຊິ່ງກັນ ແລະ ກັນ ຂອງຄະນະຜູ້ແທນໃນຫລາຍລະດັບໃຫ້ເປັນປົກກະຕິ. ນອກຈາກນັ້ນ, ສອງຝ່າຍຍັງໄດ້ປຶກສາຫາລືກ່ຽວກັບການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ກະສິກຳ, ການສຶກສາ, ສາທາລະນະສຸກ, ວັດທະນະ ທຳ, ການທ່ອງທ່ຽວ ແລະ ຂົງເຂດອື່ນໆ ທີ່ສອງຝ່າຍມີທ່າແຮງ ແລະ ມີຄວາມສົນໃຈຮ່ວມກັນ, ລວມທັງໄດ້ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ເພື່ອຮັດແໜ້ນການພົວພັນການຮ່ວມມືທີ່ມີມາແລ້ວນັ້ນ ໃຫ້ກ້າວເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງຂຶ້ນ.

ໃນໂອກາດນີ້, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈ ລັດຖະບານ ແລະ ປະຊາຊົນ ເບລາຣຸດຊີ ຕໍ່ການຊ່ວຍເຫລືອ ສປປ ລາວ ໃນໄລຍະຜ່ານມາ ໂດຍສະເພາະການພັດທະນາຊັບພະຍາກອນມະນຸດຕັ້ງແຕ່ສະໄໝສະຫະພາບໂຊວຽດ ຊຶ່ງໄດ້ກາຍເປັນກຳລັງແຮງອັນສຳຄັນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງ ສປປ ລາວ ໃນປັດຈຸບັນ.

ພາຍຫລັງສຳເລັດການພົບປະຄົບຄະນະຢ່າງເປັນທາງການແລ້ວ, ສອງລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແລະ ສ ເບລາຣຸດຊີ ໄດ້ຖະແຫລງຂ່າວຮ່ວມກັນກ່ຽວກັບຜົນສຳເລັດຂອງການພົບປະສອງຝ່າຍ.

ໃນໂອກາດເດືອນໄຫວຢ້ຽມຢາມ ສ ເບລາຣຸດຊີ ຢ່າງເປັນທາງການໃນ ຄັ້ງນີ້, ທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ນາງ ນາຕາເລຍ ໂກຈາ ໂນວາ (Natalia Kochanova) ປະທານສະພາສູງ, ສະພາແຫ່ງຊາດ ແຫ່ງ ສ ເບລາຣຸດຊີ ແລະ ທ່ານ ອິກໍ ເຊີເກ ເຢັນໂກ (Igor Sergeyenko), ປະທານສະພາຜູ້ແທນປະຊາຊົນ, ສະພາແຫ່ງຊາດ ແຫ່ງ ສ ເບລາຣຸດຊີ ແລະ ພົບປະກັບ ທ່ານ ວິກເຕ ກາຣັນເກຍວິຈ (Viktor Karankevich) ຮອງນາຍົກລັດຖະມົນຕີ ແຫ່ງ ສ ເບລາຣຸດຊີ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ແລະ ພະລັງງານ. ນອກຈາກນີ້, ທ່ານ ທອງສະຫວັນ ພົມວິຫານ ໄດ້ເຂົ້າຮ່ວມ ແລະ ກ່າວເປີດກອງປະຊຸມພົບປະພາກທຸລະກິດລະຫວ່າງ ສປປ ລາວ ແລະ ສ ເບລາຣຸດຊີ ແລະ ຍັງໄດ້ໄປຊາງພວງມາລາ ຢູ່ອະນຸສາວະລີໄຊຊະນະ. ໃນຕອນທ້າຍຂອງການຢ້ຽມຢາມ, ຍັງໄດ້ໄປຢ້ຽມຊົມສະຖານທີ່ທາງປະຫວັດສາດ ແລະ ວັດທະນະທຳທີ່ສຳຄັນຂອງ ເບລາຣຸດຊີ ຈຳນວນໜຶ່ງ.

ການຢ້ຽມຢາມ ສ ເບລາຣຸດຊີ ຢ່າງເປັນທາງການ ຂອງ ທ່ານ ທອງສະຫວັນ ພົມວິຫານ ໃນຄັ້ງນີ້ໄດ້ປະສົບຜົນສຳເລັດຕາມລະດັບຄາດໝາຍ, ພ້ອມທັງໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ແລະ ດຳເນີນໄປຢ່າງສົມກຽດແຕ່ຕົ້ນຈົນຈົບ. ພ້ອມກັນນັ້ນ, ການເດີນທາງຢ້ຽມຢາມຄັ້ງນີ້ ຍັງໄດ້ປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສປປ ລາວ ແລະ ສ ເບລາຣຸດຊີ ໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເຫດການ · 15:28 ໂມງ · ອ່ານ 10 ຄັ້ງ

ເກີດເຫດທາງຫຍຸບເປັນຂຸມຂະໜາດໃຫຍ່ ຢູ່ແຂວງຫົວພັນ



ຫົວພັນ, ປະເທດລາວ – ເກີດເຫດການທີ່ສ້າງຄວາມຕົກໃຈໃຫ້ກັບຜູ້ພົບເຫັນ ເມື່ອເສັ້ນທາງຄົມມະນາຄົມໃນເຂດ ບ້ານປ່າຢວກ ເມືອງຊໍາໃຕ້ ແຂວງຫົວພັນ ໄດ້ເກີດຫຍຸບໂຕລົງ ເປັນຂຸມເລິກຂະໜາດໃຫຍ່ ເມື່ອວັນທີ 8 ພະຈິກ 2026 ທີ່ຜ່ານມາ ສິ່ງຜົນໃຫ້ມີລົດຈັກຄັນໜຶ່ງຕົກລົງໄປໃນຂຸມດັ່ງກ່າວ.

ຈາກລາຍງານເບື້ອງຕົ້ນ ໂຊກດີເປັນຢ່າງຍິ່ງທີ່ ບໍ່ມີຜູ້ໃດໄດ້ຮັບບາດເຈັບ ຈາກເຫດການໃນຄັ້ງນີ້ ສ່ວນລົດຈັກທີ່ຕົກລົງໄປແມ່ນໄດ້ຮັບຄວາມເສຍຫາຍ.

🚨 ຂໍ້ຄວນລະວັງສໍາລັບຜູ້ໃຊ້ເສັ້ນທາງ:

ເນື່ອງຈາກຂຸມດັ່ງກ່າວມີຄວາມເລິກ ແລະ ຂະໜາດໃຫຍ່ ທາງເຈົ້າໜ້າທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈຶ່ງຂໍແຈ້ງເຕືອນມາຍັງພໍ່ແມ່ປະຊາຊົນ ແລະ ຜູ້ທີ່ຕ້ອງເດີນທາງຜ່ານເສັ້ນທາງເຂດບ້ານປ່າຢວກ ເມືອງຊໍາໃຕ້ ໃຫ້ ເພີ່ມຄວາມລະມັດລະວັງເປັນພິເສດ, ຫຼຸດຄວາມໄວລົງ ແລະ ສັງເກດປ້າຍເຕືອນຢ່າງໃກ້ຊິດ ເພື່ອຄວາມປອດໄພໃນການ ເດີນທາງ ແລະ ຫຼີກລ່ຽງອຸປະຕິເຫດທີ່ອາດ ເກີດຂຶ້ນຊໍ້າຊ້ອນ.

◆ ເຫດການ · 09:22 ໂມງ · ອ່ານ 9 ຄັ້ງ

ຈັບກຸ່ມກໍ່ອາຊະຍາກໍາທາງອິນເຕີເນັດ ສັນຊາດບັງກະລາເທດ 13 ຄົນ ຢູ່ບ້ານຮ່ອງສຸພາບ



ໃນຄືນວັນທີ 7 ພະຈິກ 2026 ທີ່ຜ່ານມາ, ກໍາລັງເຈົ້າໜ້າທີ່ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ລົງເຄື່ອນໄຫວ ບຸກເຂົ້າກວດກາ ແລະ ມ້າງກຸ່ມແກ໊ງກໍ່ອາຊະຍາກໍາທາງອິນເຕີເນັດ ຢູ່ເຮືອນໃຫ້ເຊົ່າ ຕັ້ງຢູ່ບ້ານຮ່ອງສຸພາບ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.

ຜ່ານການກວດກາ ເຈົ້າໜ້າທີ່ສາມາດກັກຕົວຜູ້ຖືກຫາ ເຊິ່ງເປັນຄົນສັນຊາດ ບັງກະລາເທດ ຈໍານວນ 13 ຄົນ ຍິງ 1 ຄົນ, ພ້ອມທັງກວດກາພົບ ແລະ ຍຶດຂອງກາງທີ່ຖືກນໍາໃຊ້ເຂົ້າໃນການກະທໍາຜິດ ປະກອບມີ ໂທລະສັບມືຖື ຈໍານວນ 21 ເຄື່ອງ ແລະ ຄອມພິວເຕີຕັ້ງໂຕະ ຈໍານວນ 12 ເຄື່ອງ.

ປັດຈຸບັນ, ເຈົ້າໜ້າທີ່ວິຊາສະເພາະ ກໍາລັງເລັ່ງດໍາເນີນການສືບສວນ-ສອບສວນ ເພື່ອຂະຫຍາຍຜົນຫາຜູ້ຮ່ວມຂະບວນການ ແລະ ພັກພວກມາດໍາເນີນຄະດີຕາມກົດໝາຍ.

ທີ່ມາ: ຄວາມສະຫງົບ Lao Security News ·

ລາຄານໍ້າມັນ, ເງິນ, ຄໍາ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ໂຄສະນາ
ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ
ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ທ່ອງທ່ຽວ · 15:31 ໂມງ · ອ່ານ 8 ຄັ້ງ

ຈຳປາສັກ ຕິດຕາມຄວາມຄືບໜ້າໂຄງການລົງທຶນ ແລະ ການຄຸ້ມຄອງແຫຼ່ງທ່ອງທ່ຽວ ຕາດຄອນພະເພັງ-ຕາດສົມພະມິດ



ແຫລ່ງຂ່າວຈາກ ແຂວງຈຳປາສັກ ໃຫ້ຮູ້ວ່າ: ໃນທ້າຍອາທິດຜ່ານມາ, ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແຂວງຈຳປາສັກ ລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການລົງທຶນ ແລະ ການຄຸ້ມຄອງບໍລິຫານແຫລ່ງທ່ອງທ່ຽວ 2 ແຫ່ງ ຄື: ນ້ຳຕົກຕາດຄອນພະເພັງ ແລະ ນ້ຳຕົກຕາດສົມພະມິດ ທີ່ເມືອງໂຂງ ແຂວງຈຳປາສັກ ພ້ອມທັງຕິດຕາມການດຳເນີນງານ ຂອງບັນດາຫົວໜ່ວຍທຸລະກິດພາຍໃນ ເຂດພັດທະນາເສດຖະກິດໃໝ່ສີທັນດອນ ໂດຍມີທ່ານ ກໍລະກັນ ຄຳມະວົງ ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງຈຳປາສັກ, ທ່ານ ຈັນທະນົງສິນ ຈັນທະພິມ ປະທານຄະນະກຳມະການປົກຄອງເມືອງໂຂງ ພ້ອມດ້ວຍພະແນກການຂອງແຂວງ, ຫ້ອງການກ່ຽວຂ້ອງຂອງເມືອງ, ບັນດາບໍລິສັດ ແລະ ຫົວໜ່ວຍທຸລະກິດທີ່ດຳເນີນກິດຈະການຢູ່ໃນເຂດດັ່ງກ່າວເຂົ້າຮ່ວມ.

ນ້ຳຕົກຕາດຄອນພະເພັງ ແລະ ນ້ຳຕົກຕາດສົມພະມິດ ເປັນແຫລ່ງທ່ອງທ່ຽວທຳມະຊາດທີ່ສຳຄັນ ແລະ ເປັນຈຸດໝາຍປາຍທາງດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ຊຶ່ງການລົງພື້ນທີ່ຄັ້ງນີ້, ກໍເພື່ອຕິດຕາມການຈັດຕັ້ງຄຸ້ມຄອງ, ການບໍລິຫານ, ການດຳເນີນງານຂອງບໍລິສັດ ຄຸ້ມຄອງບໍລິຫານແຫລ່ງທ່ອງທ່ຽວສີທັນດອນ ຈຳກັດ ແລະ ບໍລິສັດ ທ່ອງທ່ຽວ ຄຣີມແອັດແວນເຈີ ຈຳກັດຜູ້ດຽວ. ພ້ອມນີ້, ກໍເພື່ອຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ 3 ເນື້ອໃນສຳຄັນ ຄື: ການດຳເນີນໂຄງການຂອງບໍລິສັດ ຮ່ວມພັດທະນາສີທັນດອນ ຈຳກັດ; ການຄຸ້ມຄອງບໍລິຫານ 2 ແຫລ່ງທ່ອງທ່ຽວ; ແລະ ການຈັດຕັ້ງປະຕິບັດໂຄງການຂອງບັນດາຫົວໜ່ວຍທຸລະກິດ ທີ່ດຳເນີນກິດຈະການຢູ່ໃນເຂດພັດທະນາເສດຖະກິດໃໝ່ສີທັນດອນ.

ທ່ານ ກໍລະກັນ ຄຳມະວົງ ໃຫ້ຮູ້ວ່າ: ການລົງຕິດຕາມຄັ້ງນີ້ ເປັນການປະສານສົມທົບລະຫວ່າງພາກລັດ ແລະ ພາກເອກະຊົນ ເພື່ອກວດກາຄວາມຄືບໜ້າ, ຮັບຟັງລາຍງານຜົນການດຳເນີນງານ, ປຶກສາຫາລືບັນຫາຄົງຄ້າງ ແລະ ກຳນົດທິດທາງແກ້ໄຂຮ່ວມກັນ ເພື່ອໃຫ້ບັນດາໂຄງການລົງທຶນສາມາດດຳເນີນໄປຕາມສັນຍາ ແລະ ລະບຽບກົດໝາຍ, ພ້ອມທັງຊຸກຍູ້ການພັດທະນາແຫລ່ງທ່ອງທ່ຽວ ໃຫ້ມີຄວາມຍືນຍົງ ສ້າງລາຍຮັບໃຫ້ປະຊາຊົນ ແລະ ສັງຄົມໂດຍລວມ.

ຂ່າວ: ຈັນທະວີສັກ

ສາລະໜ້າຮູ້

ສາລະໜ້າຮູ້ · 16:44 ໂມງ · ອ່ານ 6 ຄັ້ງ

ເລື່ອງຂອງແມວ? ຍ້ອນຫຍັງແມວຈຶ່ງມັກເຂົ້າໄປຢູ່ໃນລັງແກ້ດຫຼາຍກ່ວາຂອງຫຼິ້ນລາຄາແພງ!



ໜຶ່ງໃນພຶດຕິກຳທີ່ຄົນລ້ຽງແມວຫຼາຍຄົນຄຸ້ນເຄີຍ ຄືການເຫັນນ້ອງແມວມັກຟ້າວເຂົ້າໄປສຳຫຼວດກ່ອງພັດສະດຸທັນທີ ເມື່ອພົບເຫັນກ່ອງແກ້ດ ບໍ່ວ່າຈະເປັນກ່ອງໃຫຍ່ ຫຼື ກ່ອງນ້ອຍໆທີ່ເບິ່ງແລ້ວບໍ່ໜ້າຈະເໝາະກັບຂະໜາດຕົວຂອງມັນ ແຕ່ແມວກໍຍັງພະຍາຍາມມຸດເຂົ້າໄປໃຫ້ໄດ້.

ເຖິງແມ່ນວ່າຈະມີບ່ອນນອນລາຄາແພງ ຫຼື ເບາะນຸ່ມໆວາງຢູ່ໃກ້ໆ ແຕ່ກ່ອງເຈ້ຍກັບກາຍເປັນສະຖານທີ່ຖືກໃຈເປັນພິເສດຂອງແມວໄດ້ຢ່າງໜ້າປະຫຼາດໃຈ. ພຶດຕິກຳນີ້ບໍ່ໄດ້ເກີດຈາກຄວາມຂີ້ຫຼິ້ນພຽງຢ່າງດຽວ ແຕ່ຍັງກ່ຽວຂ້ອງກັບສັນຊາດຕະຍານ ແລະ ຄວາມຕ້ອງການຕາມທຳມະຊາດຂອງແມວອີກດ້ວຍ.

5 ເຫດຜົນທີ່ແມວມັກເຂົ້າໄປລີ້ຊ່ອນຢູ່ໃນກ່ອງເຈ້ຍ

1. ກ່ອງເປັນພື້ນທີ່ປອດໄພ ຊ່ວຍໃຫ້ຮູ້ສຶກອຸ່ນໃຈ

ແມວເປັນສັດທີ່ມັກມີບ່ອນລີ້ຊ່ອນ ເພາະຊ່ວຍໃຫ້ມັນຮູ້ສຶກປອດໄພຈາກສິ່ງລົບກວນອ້ອມຂ້າງ. ກ່ອງເຈ້ຍທີ່ມີຂອບລ້ອມຮອບຈຶ່ງປຽບເໝືອນພື້ນທີ່ສ່ວນຕົວ ທີ່ຊ່ວຍຫຼຸດການຖືກລົບກວນ. ນອກຈາກນີ້ ແມວຍັງສາມາດມອງເຫັນສິ່ງຕ່າງໆອ້ອມຕົວຜ່ານຊ່ອງເປີດໄດ້ ໂດຍບໍ່ຈຳເປັນຕ້ອງເຜີຍຕົວອອກມາທັງໝົດ.

2. ຊ່ວຍຜ່ອນຄາຍຄວາມຄຽດ ແລະ ຫຼຸດຄວາມກັງວົນ

ເມື່ອແມວຮູ້ສຶກຄຽດ, ຫວາດກົວ ຫຼື ຢູ່ໃນສະພາບແວດລ້ອມທີ່ບໍ່ຄຸ້ນເຄີຍ ການໄດ້ເຂົ້າໄປລີ້ຢູ່ໃນກ່ອງອາດຊ່ວຍໃຫ້ມັນຮູ້ສຶກສະຫງົບຂຶ້ນ ເພາະເປັນພື້ນທີ່ທີ່ສາມາດຄວບຄຸມສິ່ງລົບກວນອ້ອມຕົວໄດ້ງ່າຍຂຶ້ນ. ດັ່ງນັ້ນ ຈຶ່ງບໍ່ແປກທີ່ແມວບາງໂຕມັກເຂົ້າໄປຢູ່ໃນກ່ອງເມື່ອມີແຂກມາຢາມ ຫຼື ເມື່ອມີການປ່ຽນແປງພາຍໃນເຮືອນ.

3. ເປັນຈຸດຊຸ່ມໂຈມຕີຕາມສັນຊາດຕະຍານນັກລ່າ

ເຖິງແມ່ນຈະເປັນແມວລ້ຽງທີ່ບໍ່ຈຳເປັນຕ້ອງອອກໄປລ່າອາຫານເອງ ແຕ່ສັນຊາດຕະຍານນັກລ່າຂອງມັນຍັງຄົງຢູ່. ກ່ອງຈຶ່ງກາຍເປັນຈຸດລີ້ຊ່ອນທີ່ດີສຳລັບການເຝົ້າເບິ່ງ ແລະ ລໍຖ້າຈັງຫວະກະໂຈນໂດດເຂົ້າໃສ່ເຫຍື່ອ ບໍ່ວ່າຈະເປັນໝາກບານ, ຂອງຫຼິ້ນ ຫຼື ແມ່ນແຕ່ຕີນຂອງເຈົ້າຂອງທີ່ຍ່າງຜ່ານໄປມາ!

4. ຊ່ວຍຮັກສາຄວາມອົບອຸ່ນໃຫ້ຮ່າງກາຍ

ແມວມັກອຸນຫະພູມທີ່ອົບອຸ່ນສະບາຍ ແລະ ກ່ອງເຈ້ຍສາມາດຊ່ວຍຫຼຸດການສູນເສຍຄວາມຮ້ອນຂອງຮ່າງກາຍໄດ້ໃນລະດັບໜຶ່ງ ໂດຍສະເພາະກ່ອງທີ່ມີຂະໜາດພໍດີກັບຕົວ. ເມື່ອແມວຂົດຕົວຢູ່ພາຍໃນ ກໍຈະກາຍເປັນພື້ນທີ່ພັກຜ່ອນທີ່ອົບອຸ່ນ ແລະ ສະບາຍຕົວຫຼາຍຂຶ້ນ.

5. ຄວາມຢາກຮູ້ຢາກເຫັນ ແລະ ການສຳຫຼວດສິ່ງໃໝ່

ແມວເປັນສັດທີ່ມັກສຳຫຼວດສິ່ງແວດລ້ອມ. ເມື່ອມີກ່ອງໃບໃໝ່ເຂົ້າມາໃນເຮືອນ ທັງກິ່ນ, ຜິວສຳຜັດ ແລະ ສຽງຂອງເຈ້ຍເວລາຂະຍັບ ຫຼື ສຽດສີກັນ ລ້ວນແຕ່ເປັນສິ່ງກະຕຸ້ນຄວາມສົນໃຈຂອງມັນໄດ້. ດັ່ງນັ້ນ ກ່ອງຈຶ່ງບໍ່ແມ່ນພຽງບ່ອນນອນ ແຕ່ຍັງເປັນຂອງຫຼິ້ນອັນໃໝ່ທີ່ຊ່ວຍໃຫ້ແມວໄດ້ສຳຫຼວດ ແລະ ໃຊ້ເວລາຢ່າງມ່ວນຊື່ນອີກດ້ວຍ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ຂ່າວຕ່າງປະເທດ

ຂ່າວຕ່າງປະເທດ · 10:12 ໂມງ · ອ່ານ 14 ຄັ້ງ

ທຣຳຢືນຢັນ “ເປັນໄປໄດ້ໜ້ອຍຫຼາຍ” ທີ່ຈະໂຈມຕີອີຣານຮອບໃໝ່ ຫາກການເຈລະຈາມີຄວາມຄືบໜ້າ



ໂດນັລ ທຣຳ ກ່າວຢ້ຳວ່າ ມີຄວາມເປັນໄປໄດ້ໜ້ອຍຫຼາຍທີ່ລາວຈະສັ່ງໃຫ້ກອງທັບໂຈມຕີອີຣານອີກຄັ້ງ ຫາກການເຈລະຈາເລື່ອງໂຄງການນິວເຄຼຍ ແລະການເປີດຊ່ອງແຄບຮໍມຸຊ (Hormuz) ຍັງຄົງມີຄວາມຄືบໜ້າ.

ປະທານາທິບໍດີ ໂດນັລ ທຣຳ ຂອງສະຫະລັດ ໄດ້ໃຫ້ສຳພາດທາງໂທລະສັບກັบສະຖານີໂທລະພາบ CNN ໂດยเว้าเຖິງ 5 ຄັ້ງວ່າ ມີຄວາມເປັນໄປໄດ້ “ໜ້ອยหลาย” ທີ່ລາວຈະต้องสั่งการให้กองทับสะหะลัดฯ เปิดสากโจมตีใส่อิธานอีกครั้ง ตาบใดที่การเจละจาก่วกับโครงการนิวเคลียร และการเปิดเส้นทางขนส่งในช่องแคบฮอร์มุซยังคงมีความคืบหน้า.

ท่าน ทรัมป์ ละบุว่า ขึ้นอยู่กับว่าอิธานจะยอมลงนามในข้อตกลงที่เข้มงวดหรือบ่ พ้อมทั้งชี้ว่าอิธานเป็นประเทดที่กำลังหรือมเหือ และเผชิญกับวิกฤดการทางเสดถะกิดขั้นรุนแรง ด้วยอัดตาเงินเฟ้สูงเถิง 301% ลอมเถิงถูกโจมตีทางการทะหารย่างหนักจินสักกะยะพาบอ่อนแอลงย่างหวองหวาย. อย่างใดกอดาม, หากมีความจำเป็น สะหะลัดฯ กอ้อมที่จะดำเนินการต่.

ท่าน ทรัมป์ เปิดเผยอีกว่า สะหะลัดฯ มีเรือบันทุกเครื่องบิน 3 ลำ ประจำการอยู่ในพากพื้นตาเอ้นออกกาง และพ้อมปะติบัดการทันทีหากมีคำสั่ง. นอกจากนี้ ยังได้กำนิดเป้าหมายโครงสร้างพื้นถานในอิธานไว้แล้ว เช่น: ຂົວ 38 ແຫ່ງ ແລะໂຮງไฟฟ้า แต่ผู้นำสะหะลัดฯ ละบุว่า บ่อยากทำลายโครงสร้างพื้นถานเหล่านั้น เพาะต้องใช้เวลาฟื้นฟูนานเป็นสิบปี.

ผู้นำสะหะลัดฯ อ้างต่อว่า ละบบป้องกันไพทางอากาดของอิธานถูกทำลายไปหมดแล้ว ส่วนถังอาวุดแม่นเหือยิดถอามสามาดในการผะลิดขีปะนาวุดพวง 10% และโดธนพวง 15% เท่านั้น เนื่องจากโธงงานส่วนใหย่ถูกทำลายไปแล้ว.

ทั้งนี้, พายหลังผ่านพื้นสึกเลือกตั้งกางสะไหมของสะหะลัดฯ เมื่อสับปะดาห่อน, การเคลื่อนไหวทางการทูดในตาเอ้นออกางกับมาเพิ่มสูงขึ้นอีกครั้ง โดยปะทานาธิบดี ทรัมป์ ได้ต่อสายโทละสับหา ซิด ทามีม บิน ธามัด อัล ทานี เจ้าผู้ถองมะถอนกาตา เพื่อหาลือกว่วกับแนวทางในการหยุดผ่อนถอามตึงถวด.

ขะนะที่ลัดถะมนตีกะซวงการต่างปะเทดอิธาน ได้ธ่อมพูดถุยหาลือทางโทละสับกับลัดถะมนตีกะซวงการต่างปะเทดของปะเทดอ่าวถ้า และพันทะมิดในพากพื้น ได้แก่: ซาอุดิดอาธาบิ, สะหะลัดอาธับเอมิเธด (UAE), โอมาน, ปากิดสะถาน, กูเวด, จอแดน, ตอกกิ, ไซปรัด และกาตา.

แนวใดกอดี, สะหะลัดฯ กอได้ยกละดับการกดดันอิธาน ด้วยการตั้งลางอัน 20 ล้านโดลาสำลับใผกอตาม

ต่ໜ້າ 11

ທຣຳຢືນຢັນ “ເປັນໄປໄດ້ໜ້ອຍຫຼາຍ” ທີຈະໂຈມຕີອີຣານຮອບໃ... (ຕໍ່ຈາກໜ້າ 10)

ທີ່ໃຫ້ຂໍ້ມູນໂຄງການນິວເຄຼຍອີຣານ ພ້ອມສະເໜີຊ່ວຍຍົກຍ້າຍທີ່ຢູ່ໃໝ່ໃຫ້ແກ່ຜູ້ທີ່ໃຫ້ເບາะແສ ແລະຈັດຕັ້ງໜ່ວຍສະເພາະກິດເພື່ອປິດກັ້ນເສັ້ນທາງຂົນສົ່ງອາວຸດທາງ ບົກເຂົ້າສູ່ເຕເຮຣານນຳດ້ວຍ.

ທີ່ມາ:cnn

ຂ່າວຕ່າງປະເທດ · 14:34 ໂມງ · ອ່ານ 12 ຄັ້ງ

Nvidia ເລີ່ມສືບສວນ ກໍລະນີ “ເຈນເຊນ ຫວາງ” ເປັນຊູ້ກັບຍິງຕ້ອງສົງໃສເປັນສາຍລັບຈີນ



ບໍລິສັດ Nvidia ເລີ່ມການສືບສວນອົດສະຫຼະ ກໍລະນີທີ່ທ່ານ ເຈນເຊນ ຫວາງ ຊີອີໂອຂອງບໍລິສັດ ຄົບຊູ້ກັບຍິງຊາວຈີນທີ່ໜ່ວຍຂ່າວກອງສະຫະລັດ ສົງໃສວ່າເປັນສາຍລັບຈີນ.

ເມື່ອວັນອາທິດທີ 8 ພະຈິກ 2026, “ເອັນວິເດຍ” (Nvidia) ບໍລິສັດເຕັກໂນໂລຊີຍັກໃຫຍ່ຂອງສະຫະລັດ ປະກາດເລີ່ມການສືບສວນອົດສະຫຼະຢ່າງເປັນທາງການ ຫຼັງມີລາຍງານວ່າທ່ານ ເຈນເຊນ ຫວາງ ປະທານເຈົ້າໜ້າທີ່ບໍລິຫານ (ຊີອີໂອ) ຂອງບໍລິສັດ ມີຄວາມສຳພັນທາງຊູ້ສາວກັບບຸກຄົນທີ່ຕ້ອງສົງໃສວ່າເປັນສາຍລັບຈີນ.

ເອັນວິເດຍລະບຸວ່າ ຄະນະກຳມະການບໍລິຫານຂອງບໍລິສັດບໍ່ມີເຫດຜົນໃຫ້ເຊື່ອວ່າ ຄວາມລັບຂອງບໍລິສັດ ຫຼື ຄວາມໝັ້ນຄົງແຫ່ງຊາດຈະໄດ້ຮັບຄວາມເສຍຫາຍຈາກເຫດການນີ້ ພ້ອມເສີມວ່າ ຊີອີໂຍ້ງຄົງມຸ່ງໝັ້ນທີ່ຈະນຳພາບໍລິສັດຕໍ່ໄປ.

ດ້ານ ເຈນເຊນ ຫວາງ ອອກຖະແຫຼງການຍອມຮັບວ່າ “ຂ້ອຍບໍ່ຊື່ສັດຕໍ່ພັນລະຍາ ການກະທຳຂອງຂ້ອຍໄດ້ທຳຮ້າຍລາວແລະລູກໆຂອງພວກເຮົາ ສິ່ງທີ່ຂ້ອຍເຮັດບໍ່ມີຂໍ້ແກ້ຕົວໃດໆ ຂ້ອຍຮູ້ສຶກເສຍໃຈເປັນຢ່າງຍິ່ງ”

“ກ່ຽວກັບຄວາມກັງວົນດ້ານຄວາມໝັ້ນຄົງແຫ່ງຊາດທີ່ຖືກຍົກຂຶ້ນມາໃນລາຍງານຂ່າວນັ້ນ ຄະນະກຳມະການບໍລິຫານຂອງເອັນວິເດຍ ໄດ້ເລີ່ມທຳການສອບສວນຢ່າງເປັນອິດສະຫຼະແລ້ວ ຂ້ອຍສະໜັບສະໜຸນການສອບສວນນີ້ແລະຈະໃຫ້ຄວາມຮ່ວມມືຢ່າງເຕັມທີ່”

“ຂ້ອຍຮັກປະເທດແລະບໍລິສັດຂອງພວກເຮົາ ຂ້ອຍມຸ່ງໝັ້ນທີ່ຈະປົກປ້ອງເອັນວິເດຍ ແລະສະໜັບສະໜຸນຄວາມໝັ້ນຄົງແຫ່ງຊາດຂອງອາເມລິກາ ຂ້ອຍຮູ້ສຶກພາກພູມໃຈແລະຊາບຊຶ້ງໃຈທີ່ໄດ້ເປັນຊາວອາເມຣິກັນ” ເຈນເຊນ ຫວາງກ່າວ ພ້ອມລະບຸດ້ວຍວ່າ ເຂົາຈະຮັບຜິດຊອບຕໍ່ສິ່ງທີ່ເກີດຂຶ້ນທັງໝົດ.

ຕາມລາຍງານຂອງສຳນັກຂ່າວ ນິວຢອກໄທມ໌ສ ເຈົ້າໜ້າທີ່ຂ່າວກອງຂອງສະຫະລັດ ເຊື່ອວ່າ ອາລິສ ຫວາງ (Alice Huang) ນັກທຸລະກິດຍິງຊາວຈີນຊຶ່ງມີຄວາມສຳພັນໃກ້ຊິດກັບ ເຈນເຊນ ຫວາງ ເປັນສາຍລັບຂອງກະຊວງຄວາມໝັ້ນຄົງແຫ່ງລັດຂອງຈີນ (MSS).

ນິວຢອກໄທມ໌ສ ລາຍງານໂດຍອ້າງຄຳເວົ້າຂອງແຫຼ່ງຂ່າວທີ່ບໍ່ເປີດເຜີຍຊື່ວ່າ ໜ່ວຍງານຂ່າວກອງຂອງສະຫະລັດ ໄດ້ເຝົ້າຕິດຕາມ ອາລິສ ຫວາງ ໂດຍການເຝົ້າລະວັງໄດ້ເຜີຍໃຫ້ເຫັນການຕິດຕໍ່ສື່ສານລະຫວ່າງ ອາລິສ ຫວາງ ກັບພົນລະເມືອງອາເມຣິກັນລາຍໜຶ່ງ ຊຶ່ງຕໍ່ມາຖືກລະບຸວ່າ ຄືອນາຍ ເຈນເຊນ ຫວາງ. ເຖິງຢ່າງໃດກໍ່ຕາມ ຍັງບໍ່ເປັນທີ່ແນ່ຊັດວ່າ ອາລິສ ຫວາງ ຫຼືທີ່ຮູ້ຈັກກັນໃນຊື່ ຫວາງ ເລີ (Huang Le) ໄດ້ສົ່ງມອບຂໍ້ມູນໃດໃຫ້ແກ່ລັດຖະບານຈີນຫຼືບໍ່, ຂໍ້ມູນນັ້ນມີມູນຄ່າພຽງໃດ ຫຼືເລີ່ມລວບລວມຂໍ້ມູນຂ່າວສັ້ງແຕ່ເມື່ອໃດ.

ດ້ານທາງການຈີນປະຕິເສດລາຍງານດັ່ງກ່າວ ແລະລະບຸວ່າ ຂໍ້ກ່າວຫາເລື່ອງປະຕິບັດການຈາລະກຳຂໍ້ມູນທີ່ມຸ່ງປ່າວໃສ່ຫົວໜ້າໃຫຍ່ຂອງ Nvidia ນັ້ນ ເປັນ “ການຄາດເດົາທີ່ບໍ່ມີຫຼັກຖານ”.

ທີ່ມາ: bbc

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ຂ່າວຕ່າງປະເທດ · 09:42 ໂມງ · ອ່ານ 12 ຄັ້ງ

ເຫດສະຫຼົດໃຈ! ເຮລິຄອບເຕີຕົກລົງແມ່ນ້ຳ ຂະນະປະຕິບັດພາລະກິດດັບໄຟປ່າໃນ ອິນໂດເນເຊຍ ສົ່ງຜົນໃຫ້ລູກເຮືອເສຍຊີວິດ 1 ຄົນ



ເກີດເຫດເຮລິຄອບເຕີຕົກ ຂະນະພະຍາຍາມດັບໄຟປ່າໃນປະເທດອິນໂດເນເຊຍ ເປັນລຳທີ 2 ພາຍໃນອາທິດດຽວ ໂດຍເຫດການລ່າສຸດມີຜູ້ເສຍຊີວິດ 1 ຄົນ ສ່ວນນັກບິນ 2 ຄົນລອດຊີວິດ.

ເມື່ອວັນອາທິດ ທີ 8 ພະຈິກ 2026 ເຮລິຄອບເຕີດັບໄຟປ່າລຳໜຶ່ງໄດ້ຕົກລົງໃນແມ່ນ້ຳ ຂະນະກຳລັງຕັກນ້ຳຂຶ້ນມາ ເພື່ອນຳໄປຖິ້ມດັບໄຟປ່າໃນປະເທດອິນໂດເນເຊຍ ສົ່ງຜົນໃຫ້ລູກເຮືອເສຍຊີວິດ 1 ຄົນ ນັບເປັນເຫດເຮລິຄອບເຕີຕົກລຳທີ 2 ໃນຮອບບໍ່ເທົ່າໃດມື້ ທ່າມກາງວິກິດໄຟປ່າທີ່ຍັງຄຶງຮຸນແຮງ.

ເຫດການລ່າສຸດເກີດຂຶ້ນທີ່ແມ່ນ້ຳບາຣິໂຕ (Barito) ໃນແຂວງກາລິມັນຕັນໃຕ້ ເທິງເກາະບອນເນຍ ໂດຍເຮລິຄອບເຕີລຸ້ນ Eurocopter EC225LP Super Puma ໄດ້ລົງໄປຕັກນ້ຳຈາກແມ່ນ້ຳ ແຕ່ນ້ຳໜັກຂອງນ້ຳທີ່ເພີ່ມຂຶ້ນຄ່ອຍໆ ດຶງເຄື່ອງລົງ ຈົນເຮັດໃຫ້ເຮລິຄອບເຕີໝຸ່ງ ຫົວລົງກະແທກຜິວນ້ຳຢ່າງຮຸນແຮງ.

ນັກບິນຊາວອິດສະຕຣາລີ 2 ຄົນ ລອດຊີວິດ ແລະປອດໄພ ຂະນະທີ່ທີມຄົ້ນຫາ ແລະກູ້ໄພ (SAR) ພ້ອມດ້ວຍນັກປະດານ້ຳ 4 ຄົນ ໄດ້ກູ້ຮ່າງຜູ້ເສຍຊີວິດຄົນສຸດທ້າຍຂຶ້ນຈາກແມ່ນ້ຳໄດ້ໃນເວລາ 18:08 ໂມງ ຂອງວັນອາທິດ ທີ 8 ພະຈິກ ຕາມເວລາທ້ອງຖິ່ນ.

ທັງນີ້ ເຮລິຄອບເຕີລຳທີ່ປະສົບເຫດເປັນຂອງບໍລິສັດເອກະຊົນ ທີ່ສຳນັກງານບັນເທົາສາທາລະນະໄພໄດ້ວ່າຈ້າງມາເພື່ອປະຕິບັດພາລະກິດດັບໄຟປ່າ.

ກ່ອນໜ້ານີ້ ເມື່ອວັນພຸດທີ່ຜ່ານມາ ກໍເກີດເຫດເຮລິຄອບເຕີຂອງກອງທັບ ພ້ອມຜູ້ໂດຍສານ 8 ຄົນ ຕົກຂະນະປະຕິບັດພາລະກິດດັບໄຟປ່າໃນອຸທິຍານແຫ່ງຊາດຕັນຈຸງ ປຸຕິງ (Tanjung Puting) ເຊິ່ງເປັນຖິ່ນອາໄສຂອງລີງອຸຣັງອຸຕັງບອນເນຍ. ເຮລິຄອບເຕີລຳດັ່ງກ່າວຕົກຂະນະກຳລັງຕັກນ້ຳຈາກແມ່ນ້ຳເຊັ່ນກັນ ເຮັດໃຫ້ມີຜູ້ເສຍຊີວິດ 3 ຄົນ.

ທັງນີ້ ອິນໂດເນເຊຍກຳລັງປະເຊີນກັບສະຖານະການໄຟປ່າຮຸນແຮງມາເປັນເວລາຫຼາຍເດືອນ ເຊິ່ງໄດ້ເຜົາທຳລາຍພື້ນທີ່ປ່າໄມ້ໃນເກາະສຸມາຕຣາ, ບອນເນຍ ແລະ ປາປົວ ໄປແລ້ວຫຼາຍກວ່າ 1.9 ລ້ານ ເຮັກຕາ ສົ່ງຜົນໃຫ້ເກີດໝອກຄວັນພິດໜາແໜ້ນ ລອຍໄປປົກຄຸມປະເທດໃກ້ຄຽງ ເຊັ່ນ ມາເລເຊຍ, ຕິມໍ-ເລສເຕ ແລະສິງກະໂປ.

ທີ່ມາຂ່າວ: cna

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ຂ່າວຕ່າງປະເທດ · 16:17 ໂມງ · ອ່ານ 11 ຄັ້ງ

ຈີນຄົ້ນພົບກົບສາຍພັນໃໝ່ “ກົບໄຫ່ໜານ ໂກຣຟ-ໂທດ” ສະທ້ອນປ່າຝົນເຂດຮ້ອນຟື້ນຕົວ.



ທີມວິໄຈຈີນຄົ້ນພົບສັດສະເທີນນ້ຳສະເທີນບົກສາຍພັນໃໝ່ “ກົບໄຫ່ໜານ ໂກຣຟ-ໂທດ” ຫຼັງຕິດຕາມສຳຫຼວດດິນ 3 ປີ ສະທ້ອນປ່າຝົນເຂດຮ້ອນຟື້ນຕົວ

ວັນທີ 9 ພະຈິກ 2026 ສຳນັກຂ່າວ (ຊິນຫົວ) ລາຍງານ: ນັກວິໄຈຈີນຄົ້ນພົບສັດສະເທີນນ້ຳສະເທີນບົກສາຍພັນໃໝ່ ຢູ່ໃນແຂວງໄຫ່ໜານ ທາງພາກໃຕ້ຂອງຈີນ ໂດຍພົບພາຍໃນອຸທິຍານແຫ່ງຊາດປ່າຝົນເຂດຮ້ອນໄຫ່ໜານ. ການຄົ້ນພົບຄັ້ງນີ້ຖືກມອງວ່າເປັນອີກຫຼັກຖານໜຶ່ງທີ່ສະທ້ອນໃຫ້ເຫັນວ່າ ລະບົບນິເວດຂອງປ່າຝົນເຂດຮ້ອນໃນພື້ນທີ່ດັ່ງກ່າວກຳລັງຟື້ນຟູ ແລະ ມີຄວາມອຸດົມສົມບູນຫຼາຍຂຶ້ນ.

ພາບຖ່າຍນີ້ຖືກບັນທຶກໄວ້ເມື່ອວັນທີ 11 ມັງກອນ 2024 ສະແດງໃຫ້ເຫັນກົບໄຫ່ໜານ ໂກຣຟ-ໂທດ (Hainan groove-toed frog) ມີຊື່ວິທະຍາສາດວ່າ Rana hainan ເຊິ່ງຄົ້ນພົບໃນແຂວງໄຫ່ໜານ ທາງພາກໃຕ້ຂອງຈີນ. (ຊິນຫົວ)

ກົບສາຍພັນໃໝ່ນີ້ມີຊື່ວ່າ “ກົບໄຫ່ໜານ ໂກຣຟ-ໂທດ” (Hainan groove-toed frog) ມີຊື່ວິທະຍາສາດວ່າ Rana hainan. ເປັນຜົນງານຂອງທີມວິໄຈຈາກຄະນະວິທະຍາສາດຊີວະສາດ ມະຫາວິທະຍາໄລຄູໄຫ່ໜານ ຮ່ວມກັບນັກວິໄຈຈາກມະຫາວິທະຍາໄລອື່ນໆ. ໂດຍຜົນການສຶກສາໄດ້ຮັບການຕີພິມໃນວາລະສານ ZooKeys ເຊິ່ງເປັນວາລະສານວິຊາການສາກົນດ້ານອະນຸກົມວິທານສັດ.

ໃນຊ່ວງປີ 2024-2026 ທີມວິໄຈໄດ້ລົງພື້ນທີ່ສຳຫຼວດສັດສະເທີນນ້ຳສະເທີນບົກພາຍໃນອຸທິຍານແຫ່ງຊາດຢ່າງຕໍ່ເນື່ອງ ແລະ ພົບກົບທີ່ມີລັກສະນະສະເພາະ ແຕກຕ່າງຈາກກົບສາຍພັນອື່ນໆທີ່ເຄີຍມີການບັນທຶກໄວ້.

ຈາກນັ້ນ ນັກວິໄຈໄດ້ດຳເນີນການກວດສອບເພີ່ມເຕີມ ແລະ ປຽບທຽບກັບກົບສາຍພັນອື່ນໆ ໂດຍພິຈາລະນາຈາກລັກສະນະທາງສັນຖານວິທະຍາ, ການວິເຄາະຄວາມສຳພັນທາງວິວັດທະນາການໃນລະດັບໂມເລກຸນ ແລະ ການທົດສອບດ້ານຕ່າງໆ. ຜົນການກວດສອບຢືນຢັນວ່າ ກົບກຸ່ມດັ່ງກ່າວມີຄວາມແຕກຕ່າງຫຼາຍພໍທີ່ຈະຈັດເປັນສັດສາຍພັນໃໝ່.

ປັດຈຸບັນ ກົບໄຫ່ໜານ ໂກຣຟ-ໂທດ ຖືກພົບໃນເຂດອະນຸລັກຫຼາຍແຫ່ງພາຍໃນອຸທິຍານແຫ່ງຊາດປ່າຝົນເຂດຮ້ອນໄຫ່ໜານ. ຖິ່ນອາໄສຫຼັກຂອງມັນແມ່ນປ່າຝົນເຂດຮ້ອນ ຢູ່ໃນລະດັບຄວາມສູງປະມານ 350-950 ແມັດ ເໜືອລະດັບນ້ຳທະເລ ໂດຍພົບຫຼາຍໃນປ່າດົງດິບປະເພດໄມ້ໃບກວ້າງທີ່ບໍ່ຜັດໃບ.

ທ່ານ ຫວັງ ຈີ້ເຊົ່າ ຄະນະບໍດີຄະນະວິທະຍາສາດຊີວະສາດ ມະຫາວິທະຍາໄລຄູໄຫ່ໜານ ລະບຸວ່າ ການຄົ້ນພົບຄັ້ງນີ້ຖືເປັນໜຶ່ງໃນຜົນສຳເລັດສຳຄັນຂອງການສຳຫຼວດຄວາມຫຼາກຫຼາຍທາງຊີວະພາບພາຍໃນອຸທິຍານແຫ່ງຊາດ ແລະ ພື້ນທີ່ໂດຍຮອບ. ການຄົ້ນພົບກົບສາຍພັນໃໝ່ຍັງຊ່ວຍເພີ່ມຂໍ້ມູນກ່ຽວກັບຄວາມຫຼາກຫຼາຍຂອງສັດສະເທີນນ້ຳສະເທີນບົກເທິງເກາະໄຫ່ໜານ.

ທ່ານ ຫວັງ ກ່າວວ່າ ການຄົ້ນພົບຄັ້ງນີ້ຖືເປັນ “ຫຼັກຖານທີ່ຊັດເຈນທີ່ສຸດ” ທີ່ສະທ້ອນວ່າ ສະພາບລະບົບນິເວດຂອງອຸທິຍານແຫ່ງຊາດກຳລັງດີຂຶ້ນຢ່າງຕໍ່ເນື່ອງ.

ອຸທິຍານແຫ່ງຊາດປ່າຝົນເຂດຮ້ອນໄຫ່ໜານ ຖືກກໍ່ຕັ້ງຂຶ້ນໃນປີ 2021 ແລະ ຄອບຄຸມພື້ນທີ່ປ່າຝົນເຂດຮ້ອນທີ່ມີຄວາມໜາແໜ້ນ ແລະ ໄດ້ຮັບການອະນຸລັກໄວ້ຢ່າງສົມບູນຫຼາຍທີ່ສຸດແຫ່ງໜຶ່ງຂອງຈີນ. ພື້ນທີ່ແຫ່ງນີ້ຍັງເປັນຖານສຳຄັນສຳລັບການອະນຸລັກຄວາມຫຼາກຫຼາຍທາງຊີວະພາບເທິງເກາະໄຫ່ໜານ.

ດ້ວຍລັກສະນະພູມສັນຖານທີ່ຫຼາກຫຼາຍ ທັງປ່າໄມ້, ພູເຂົາ ແລະ ສາຍນ້ຳ ເຮັດໃຫ້ພື້ນທີ່ແຫ່ງນີ້ມີແຫຼ່ງທີ່ຢູ່ອາໄສຫຼາຍຮູບແບບສຳລັບສັດປ່າ ແລະ ເປັນບ່ອນຫຼົ້ລ້ຽງສິ່ງມີຊີວິດສະເພາະຖິ່ນຈຳນວນຫຼາຍຊະນິດ.

ສຳນັກງານບໍລິຫານອຸທິຍານລະບຸວ່າ ໃນໄລຍະ 5 ປີຜ່ານມາ ໄດ້ມີການຄົ້ນພົບສັດປ່າ ແລະ ພືດສາຍພັນໃໝ່ຫຼາຍກວ່າ 90 ຊະນິດພາຍໃນພື້ນທີ່. ນອກຈາກນີ້ ປ່າດັ້ງເດີມຂອງໄຫ່ໜານຫຼາຍກວ່າ 95% ແລະ ປ່າທຳມະຊາດຫຼາຍກວ່າ 55% ຍັງໄດ້ຮັບການຄຸ້ມຄອງຢ່າງມີປະສິດທິຜົນ.

ການຄົ້ນພົບກົບສາຍພັນໃໝ່ໃນຄັ້ງນີ້ ຈຶ່ງບໍ່ພຽງແຕ່ເປັນການເພີ່ມຈຳນວນຊະນິດພັນສັດທີ່ໄດ້ຮັບການບັນທຶກໃນເຂດໄຫ່ໜານເທົ່ານັ້ນ ແຕ່ຍັງສະທ້ອນເຖິງບົດບາດສຳຄັນຂອງອຸທິຍານແຫ່ງຊາດໃນການຮັກສາຜືນປ່າຝົນເຂດຮ້ອນ ແລະ ລະບົບນິເວດທີ່ມີຄວາມສຳຄັນຕໍ່ຄວາມຫຼາກຫຼາຍທາງຊີວະພາບຂອງຈີນ.

ທີ່ມາ: Xinhua

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 10:09 ໂມງ · ອ່ານ 11 ຄັ້ງ

ເກີດລະທຶກ! ລົດໄຟ 2 ຂະບວນຕຳກັນຮຸນແຮງໃນປະເທດອີຢິບ ເສຍຊີວິດແລ້ວ 7 ຄົນ ແລະ ໄດ້ຮັບບາດເຈັບ 125 ຄົນ.



ອຸບັດຕິເຫດລົດໄຟ 2 ຂະບວນ ຕຳກັນໃນອີຢິບ ເສຍຊີວິດ 7 ຄົນ ບາດ ເຈັບ 125 ຄົນ

ເມື່ອວັນທີ 8 ພະຈິກ 2026 ເກີດ ເຫດລົດໄຟ 2 ຂະບວນຕຳກັນໃນເຂດ ພາກໃຕ້ຂອງກຸງໄຄໂຣ ນະຄອນຫຼວງ ປະເທດອີຢິບ ສົ່ງຜົນໃຫ້ຕູ້ລົດໄຟຫຼາຍຕູ້ ຕົກອອກຈາກລາງ ມີຜູ້ເສຍຊີວິດແລ້ວຢ່າງ ຫນ້ອຍ 7 ຄົນ ແລະ ໄດ້ຮັບບາດເຈັບ 125 ຄົນ..

ອຸບັດຕິເຫດລົດໄຟ 2 ຂະບວນ ຕຳກັນໃນອີຢິບ ເສຍຊີວິດ 7 ຄົນ ບາດ ເຈັບ 125 ຄົນ

ເຫດອຸບັດຕິເຫດເກີດຂຶ້ນໃນແຂວງ ກີຊາ (Giza) ຫ່າງຈາກກຸງໄຄໂຣໄປທາງ ໃຕ້ປະມານ 52 ກິໂລແມັດ ເມື່ອລົດໄຟ ສາຍກີຊາ-ໄຟຢຸມ ພຸ່ງຕຳທ້າຍລົດໄຟອີກ ຂະບວນທີ່ຈອດຢູ່ເທິງລາງດຽວກັນ. ປະທານາທິບໍດີອີຢິບໄດ້ສັ່ງການໃຫ້ເລັ່ງ ສືບສວນຫາສາເຫດ ຂະນະທີ່ສຳນັກງານໄອ ຍະການສູງສຸດໄດ້ຕັ້ງຄະນະກຳມະການ ດ້ານເຕັກນິກເພື່ອກວດສອບສາເຫດ ແລະ ຜູ້ທີ່ຕ້ອງຮັບຜິດຊອບ.

ເຫດການຄັ້ງນີ້ເຮັດໃຫ້ຕູ້ລົດໄຟຫຼາຍ ຕູ້ຕົກອອກຈາກລາງ ມີຜູ້ໂດຍສານຫຼາຍສິບ ຄົນຕິດຄ້າງຢູ່ພາຍໃນຕູ້ລົດໄຟ.

ມີລາຍງານວ່າ ຢ່າງໜ້ອຍ 7 ຄົນ ເສຍຊີວິດ ແລະ 125 ຄົນບາດເຈັບ ຈາກ ເຫດລົດໄຟໂດຍສານ 2 ຂະບວນຕຳກັນ ເມື່ອວັນທີ 8 ພະຈິກ ໃນເຂດອັນ-ອາຍັດ (Al-Ayyat) ແຂວງກີຊາ ທາງພາກໃຕ້ ຂອງກຸງໄຄໂຣ ປະເທດອີຢິບ. ໃນຈຳນວນ ຜູ້ເສຍຊີວິດມີພະນັກງານປະຈຳລົດໄຟ ລວມຢູ່ດ້ວຍ.

ຕາມລາຍງານຂອງກະຊວງ ຄົມມະນາຄົມອີຢິບ ເຫດການເກີດຂຶ້ນ ລະຫວ່າງສະຖານີຄາຟຣ໌ ອຳມາ (Kafr Ammar) ແລະສະຖານີອັນ-ຣັກກາ (Al-Raqqa) ໂດຍລົດໄຟໝາຍເລກ 134 ຊື່ວ່າ “ທາຮິຢາ ມິສຣ໌” (Tahya Misr) ເຊິ່ງແລ່ນໃນເສັ້ນທາງກີຊາ-ໄຟຢຸມ ໄດ້ພຸ່ງຕຳຕູ້ໂດຍສານທ້າຍສຸດຂອງລົດໄຟ ໝາຍເລກ 2010 ທີ່ກຳລັງເດີນທາງຈາກ ກຸງໄຄໂຣໄປຍັງເມືອງອັສວານ (Aswan).

ແຮງປະທະເຮັດໃຫ້ຕູ້ລົດໄຟຫຼາຍຕູ້ ຕົກອອກຈາກລາງ ແລະໄດ້ຮັບຄວາມ ເສຍຫາຍຢ່າງໜັກ.

ຈາກການກວດສອບເບື້ອງຕົ້ນພົບ ວ່າ ລົດໄຟສາຍກຸງໄຄໂຣ-ອັສວານ ຈອດຢູ່ ເທິງລາງດຽວກັນ ແລະແລ່ນໄປໃນທິດທາງ ດຽວກັນ ກ່ອນຈະຖືກລົດໄຟສາຍກີຊາ-ໄຟຢຸມຕຳທ້າຍ. ຢ່າງໃດກໍຕາມ ສາເຫດ ທາງເຕັກນິກທີ່ແນ່ນອນຍັງບໍ່ສາມາດລະບຸ ໄດ້.

ຫຼັງເກີດເຫດ ທາງການໄດ້ສົ່ງລົດ ໂຮງໝໍ 72 ຄັນ ເຂົ້າໄປຍັງຈຸດເກີດເຫດ ເພື່ອອົບພະຍົບຜູ້ປະສົບເຫດ ແລະນຳສົ່ງ ໂຮງໝໍໃກ້ຄຽງ.

ຕາມຕົວເລກລ່າສຸດຈາກກະຊວງ ສາທາລະນະສຸກອີຢິບ ໃນວັນທີ 8 ພະຈິກ ມີຜູ້ບາດເຈັບຫຼາຍກວ່າ 70 ຄົນ ໄດ້ອອກ ຈາກໂຮງໝໍແລ້ວ ຫຼັງຈາກໄດ້ຮັບການ ຮັກສາ.

ຜູ້ບາດເຈັບບາງຄົນມີອາການກະດູກ ແຂນ, ຂາ, ກະດູກສະໂພກ ແລະກະດູກ ສັນຫຼັງຫັກ ຂະນະທີ່ບາງຄົນມີບາດແຜ ບໍລິເວນຫົວ, ໃບໜ້າ, ໜ້າເອິກ ແລະ ກະດູກຂ້າງ. ສ່ວນຜູ້ບາດເຈັບທີ່ເຫຼືອຍັງຄົງ ພັກຮັກສາຕົວຢູ່ໃນໂຮງໝໍ.

ຊາວບ້ານໃນພື້ນທີ່ພາກັນຮີບເຂົ້າ ຊ່ວຍເຫຼືອຜູ້ໂດຍສານທີ່ຕິດຄ້າງຢູ່ພາຍໃນຕູ້ ລົດໄຟ ພ້ອມທັງໂທແຈ້ງໜ່ວຍກູ້ໄພ. ຜູ້ ລອດຊີວິດບາງຄົນເລົ່າວ່າ ຫຼັງເກີດເຫດມີ ຝຸ່ນຄວັນໜາແໜ້ນ ເຮັດໃຫ້ຕົກໃຈ ແລະ ຫາຍໃຈລຳບາກ ຂະນະທີ່ຕູ້ລົດໄຟຫຼາຍຕູ້ ເສຍຫາຍໜັກ ຈົນຜູ້ໂດຍສານບາງຄົນຫາ ທາງອອກໄດ້ຍາກ.

ປະທານາທິບໍດີອີຢິບ ອັບເດລ ຟັດ ຕາ ເອ-ຊີຊີ (Abdel Fattah el-Sisi) ກ່າວວ່າ ທ່ານຕິດຕາມ ສະຖານະການຢ່າງໃກ້ຊິດ ແລະໄດ້ສັ່ງການ ໃຫ້ເຈົ້າໜ້າທີ່ເລັ່ງສືບສວນຫາສາເຫດໂດຍ ດ່ວນ ພ້ອມກຳຊັບໃຫ້ຜູ້ບາດເຈັບໄດ້ຮັບ ການຮັກສາຢ່າງເໝາະສົມ ແລະຫາກພົບ ວ່າຜູ້ໃດປະໝາດ ຫຼືຝ່າຝືນລະບຽບຄວາມ ປອດໄພ ຈະຕ້ອງຖືກດຳເນີນຄະດີຕາມ ກົດໝາຍ.

ສຳນັກງານໄອຍະການສູງສຸດອີຢິບ ໄດ້ສົ່ງທີມສືບສວນໄປຍັງຈຸດເກີດເຫດ ແລະໂຮງໝໍທີ່ຮັບຜູ້ບາດເຈັບ ເພື່ອເກັບຄຳ ໃຫ້ການ ກວດສອບສົບ ແລະຢືນຢັນລາຍ ລະອຽດຂອງເຫດການ.

ນອກນີ້ ຍັງໄດ້ຂໍໃຫ້ຈັດຕັ້ງຄະນະ ກຳມະການດ້ານເຕັກນິກສະເພາະກິດ ເພື່ອ ກວດສອບຈຸດເກີດເຫດ, ຕູ້ລົດໄຟທີ່ ເສຍຫາຍ ແລະລະບົບລາງລົດໄຟ ເພື່ອ ຊອກຫາສາເຫດຂອງການຕຳ ແລະການ ຕົກລາງ ໂດຍຈະເນັ້ນການກວດສອບ ຄວາມຜິດພາດໃນການປະຕິບັດງານ ຫຼື ການບໍ່ປະຕິບັດຕາມມາດຕະຖານຄວາມ ປອດໄພທາງລົດໄຟ.

ຂະນະດຽວກັນ ນາຍົກ ລັດຖະມົນຕີ ໂມສຕາຟາ ມັດບູລີ (Mostafa Madbouly) ໄດ້ສັ່ງການ ໃຫ້ໜ່ວຍງານທີ່ກ່ຽວຂ້ອງປະສານງານ ຊ່ວຍເຫຼືອຄອບຄົວຜູ້ເສຍຊີວິດ ແລະ ຜູ້ບາດເຈັບ. ສ່ວນກະຊວງຄົມມະນາຄົມ ໄດ້ຈັດລົດເມສຳຮອງເພື່ອຮັບສົ່ງຜູ້ໂດຍສານ ຜ່ານຈຸດເກີດເຫດ ພ້ອມສົ່ງທີມກູ້ໄພ ແລະ ລົດເຄນເຂົ້າເຄື່ອນຍ້າຍຕູ້ລົດໄຟທີ່ເສຍຫາຍ ເພື່ອຟື້ນຟູການເດີນລົດໄຟໃຫ້ກັບມາເປັນ ປົກກະຕິໂດຍໄວ.

ນອກຈາກນີ້ ໜ່ວຍງານກຳກັບດູແລ ທາງການເງິນຂອງອີຢິບ ໄດ້ສັ່ງໃຫ້ກອງທຶນ ປະກັນໄພອຸບັດຕິເຫດທາງລົດໄຟ ແລະລົດ ລາງ ເລັ່ງຈ່າຍເງິນຊົດເຊີຍໃຫ້ຜູ້ເສຍຫາຍ. ຕາມປະກາດຂອງໜ່ວຍງານ ເງິນຊົດເຊີຍ ສຳລັບກໍລະນີເສຍຊີວິດ ຫຼືພິການຖາວອນ ໄດ້ປັບເພີ່ມຈາກ 30,000 ເປັນ 50,000 ປອນອີຢິບ.

ທີ່ມາຂ່າວ: bbc/ap

ຂ່າວຕ່າງປະເທດ · 14:50 ໂມງ · ອ່ານ 9 ຄັ້ງ

ຍີ่ปุ่นກຽມສ້າງໂຮງງານໃໝ่ ສຳລັບປະກອບເຮືອບິນກ้ູໄພທາງທະເລ (US-2) ຕັ้ງເป้ົาເปิดดຳເນີນງານປี 2029



ยี่ปุ่นเดินໜ้าเสิมสร้างท่าแรงอุดสาหะกำภาบบิน ຫลังจากบໍลิสัด ShinMaywa Industries กรุม จัดตั้งโรงงานแห่งใหม่ยู่เกาะสะหนามบินโกเบ แขวง เฮยโงะ เพื่อใช้เป็นสะถานที่ประกอบเรือบินกู้ไพทาง ทะเล US-2 โดยตั้งเป้าเลิ่มดำเนินงานในปี 2029.

ข้ๅมูนดังกล่าอถูกเปิดเผียในการแถลงข่าอ ลายงานผินประกอบการของบໍลิสัด เมื่ออันที่ 30 ตุลา 2026. โดยโรงงานแห่งใหม่นอกจากจะรองรับการ ประกอบเรือบิน US-2 สำลับกะซองกะลาโหมยี่ปุ่น แล้อ ยังมิแผนรองรับการผะลิด และ ปะกอบชิ้น ส่อนที่กี่ยวข้องกับอุดสาหะกำภาบบิน และ อะอะกาดอิกด้อย.

เรือบินกู้ไพทางทะเล US-2 (แหล่งข้ๅมูน: เอกะสานลายงานผินปะกอบการของบໍลิสัด ShinMaywa Industries)

พายปะกอบสะถานที่จาก: kobe-np

ที่มา: kobeairport

สำลับพื้นที่ก่สร้างแม่นตั้งยู่ทางทิดตาเอ้นติกสฺงเหนือของเกาะสะหนามบินโกเบ มิเนื้อที่ประมาน 17.500 ตาแม้ด. บໍลิสัดถาดอ่าจะใช้งบลงทินละดับหฺายพันล้านเยน และมิแผนเช่าที่ดินในไลยะยาอ 50 ปี.

เรือบิน US-2 เป้นเรือบินสะเทินน้ำ-สะเทินบิก ที่พัดทะนาโดยบໍลิสัด ShinMaywa สำลับกองกำลังป้องกันตินเองทางทะเลยี่ปุ่น โดยมิถอามสามาดขึ้น-ลงจอดได้ทั้งในสะหนามบิน และ เหิงผิอน้ำ.

US-2 เรือบินกู้ไพที่สามาดขึ้น-ลงจอดได้ทั้งเหิงบิก และ ผิอน้ำ

จุดเด่นสำคันของ US-2 แม่น ถอามสามาดในการปะติบัดการเหิงทะเลที่มิถื้นสูงเถิงปะมาน 3 แม้ด เร้ดให้เหมาะสำลับพาละกิดถื้นหา และ ช่อยเฮือผู้ปะสบไพทางทะเล ลอมเถิงการลำลฺงผู้ป่อยสุกเสิมจากเกาะห่างไกที่บ่มิสะหนามบิน.

การจัดตั้งโรงงานแห่งใหม่ถ้างนี้ จึ่งเป้นอิกบาดก้าอหนึ่งในการขะหยาย กำลังการผะลิดของบໍลิสัด ShinMaywa พ้อมทั้งธองรับถอามต้องการในอุดสาหะกำภาบบิน ทั้ง ขะแหนงการป้องกันปะเทด และ ขะแหนงการพินละเรือนในอะนาถิด.

ข่าวตต่างประเทด · 16:07 โมง · อ่าน 6 ถั้ง

ลัดถะบานยี่ปุ่น เพิ่มงบ 10,000 ล้านเยน ปะกาดมาดตะการนสุกเสิม รับมือด้านถอามปอดไพทางไฮเบ



อันที่ 6 พะจิกผ่านมา, ลัดถะบานยี่ปุ่นได้ปะกาดมาดตะการนสุกเสิมด้านถอามปอดไพทางไฮเบิ องงบ 10,000 ล้านเยน (ปะมาน 2,100 ล้านบาด) หลังจากบໍลิสัดเอกะชิน และ หน่อยงานลัดหลายสิบแห่ง ถูกโจมตีทางไฮเบิ, การเข้าเถิงละบบโดยบ่ได้รับอะนุยาด และ การธ้อไหลของข้ๅมูนลูกค้า. ทั้งนี้, ลัดถะบานยี่ปุ่นกรุมนำเอ้าปันยาปะดิด (AI) มาใช้อ่องไอ้ขึ้น โดยสะเพาะการนำ AI มาใช้ถื้นหาจุดอ่อนโหว่ และ พัดทะนาเถื่องมิโจมตี. ดั่งนั้น, ลัดถะบานจึ่งต้องธิบธ้อนยิกละดับละบบป้องกันเพื่อบ่ให้ถอามเสยหายลามไปสู่โถงสร้างพื้นถานที่สำคัน เช่น: ละบบการเงิน, การสื่สาน, การขินสั่ง และ การบໍลิหานของพาถะลัด.

แบ่งงบเสิม AI กวดจ่องโหว่เพิ่มสัภยะพาบตำหฺวดไฮเบิ

สำนักข่าอจิจิ เพธส (Jiji Press) ลายงานอ่า งบปะมานสุกเสิมดั่งก่าอ แบ่งออกเป้น:

2,000 ล้านเยน (ปะมาน 420 ล้านบาด) สำลับใช้ AI กวดสอบจ่องโหว่ของละบบถอมพิอเตี้พาถะลัด.

4,100 ล้านเยน (ปะมาน 860 ล้านบาด) สำลับจัดหาอุปะกอน และ ฝึกอบธีมตำหฺวด เพื่อเพิ่มปะสิดทิพาบการสืบสอบอาชะยากำทางไฮเบิ.

3,800 ล้านเยน (ปะมาน 800 ล้านบาด) สำลับยิกละดับถอามปอดไพของละบบสาสินเทดพายใต้สำนักงานดิจิตอนยี่ปุ่น (Digital Agency).

ตั้งทีม Top Gun ใช้ AI ถื้นหาจุดอ่อนก่อนแฮกเกิโจมตี

หนึ่งในมาดตะการสำคัน คือ การจัดตั้งทีมผู้ช่ยงอาน ละดับสูง หลือ Top Gun Team พายใต้กะซอง เสดถะกิด การถ้า และ อุดสาหะกำ กวดหาจ่องโหว่ พ้อมทั้งจัดตั้งทีมผู้ช่ยงอานเพื่อธับมื และ ช่อยเหลืออิงกอนที่ได้ธับผินกะทิบ.

นายิกลัดถะมินติเตือนไพแฮกเกิใช้ AI โจมตีธุมแธงขึ้น

ซานาเอะ ทาถาอิจิ (Sanae Takaichi) นายิกลัดถะมินติยี่ปุ่น ได้ปะกาดมาดตะการดังกล่าอ ละหว่างการปะชุมด้านถอามปอดไพทางไฮเบิในกรุงโตเกียว โดยละบุว่า ไพลุกถามมิถอามสับสิน และ

ยี่ปุ่น (METI) โดยตั้งเป้าเลิ่มดำเนินงานพายในสิ้นเดือนพะจิก 2026 นี้. ทีมดังกล่าอจะใช้ AI อิเถาะจ่องโหว่, กวดสอบธุบแบบการโจมตี และ ทิดสอบถอามปอดไพของเถือข่าย เพื่อถื้นหาจุดอ่อนก่อนที่แฮกเกิจะสอยใช้โอกาดจากจ่องโหว่เหล่านั้น.

นอกจากนี้, ลัดถะบานยังกรุมจัดตั้ง ทีมกู้ไพไฮเบิ (Cyber Rescue Team) เซิ่งปะกอบด้อยผู้ช่ยงอานจากพาถะลัด และ เอกะชิน

ต่อหน้า 16

ລັດຖະບານຍີ່ປຸ່ນ ເພີ່ມງົບ 10,000 ລ້ານເຢນ ປະກາດມາດຕະກ... (ຕໍ່ຈາກໜ້າ 15)

ເພື່ອຊ່ວຍເຫລືອອົງກອນທີ່ຖືກໂຈມຕີຢ່າງຮີບດ່ວນ ທັງການປະເມີນຄວາມເສຍຫາຍ, ຈຳກັດການແຜ່ກະຈາຍຂອງການໂຈມຕີ ແລະ ຟື້ນຟູລະບົບໃຫ້ກັບມາເຮັດວຽກໄດ້ຕາມປົກກະຕິ ລວມທັງສະໜັບສະໜູນບໍລິສັດຂະໜາດກາງ ແລະ ຂະໜາດນ້ອຍທີ່ຂາດແຄນບຸກຄະລາກອນດ້ານຄວາມປອດໄພທາງໄຊເບີ.

Active Cyber Defense ປ້ອງກັນໄພກ່ອນເກີດຄວາມເສຍຫາຍ

ຂະນະດຽວກັນ, ຍີ່ປຸ່ນກຽມຍົກລະດັບມາດຕະການປ້ອງກັນໄຊເບີເຊິງລຸກ (Active Cyber Defense) ເພື່ອເພີ່ມຄວາມສາມາດໃນການກວດຈັບ ແລະ ຕອບສະໜອງຕໍ່ໄພຄຸກຄາມກ່ອນເກີດຄວາມເສຍຫາຍ ພາຍໃຕ້ຂອບກົດໝາຍທີ່ກ່ຽວຂ້ອງ ໂດຍປະສານຄວາມຮ່ວມມືລະຫວ່າງກະຊວງປ້ອງກັນປະເທດ, ສຳນັກງານຕຳຫຼວດແຫ່ງຊາດ ແລະ ໜ່ວຍງານຄວາມປອດໄພທາງໄຊເບີ.

ນອກຈາກນີ້, ສຳນັກຂ່າວຣອຍເຕີສ໌ (Reuters) ຍັງລາຍງານວ່າ ຍີ່ປຸ່ນກຳລັງພິຈາລະນາຂໍ້ມູນຊ່ອງໂຫວ່ຊອບແວທີ່ຍັງບໍ່ທັນເປີດເຜີຍຕໍ່ສາທາລະນະຈາກບໍລິສັດເຕັກໂນໂລຊີຕ່າງປະເທດ ເພື່ອຽມມາດຕະການປ້ອງກັນລ່ວງໜ້າ.


ຍີ່ປຸ່ນປ່ຽນຍຸດທະສາດໄຊເບີ ມຸ່ງປ້ອງກັນເຊິງລຸກດ້ວຍ AI

ມາດຕະການຄັ້ງນີ້ຖືເປັນຄວາມພະຍາຍາມຂອງຍີ່ປຸ່ນໃນການປ່ຽນແປງຈາກການຮັບມືຫລັງຖືກໂຈມຕີ ໄປສູ່ການປ້ອງກັນໄພໄຊເບີລ່ວງໜ້າ ໂດຍໃຊ້ AI ຮ່ວມກັບຜູ້ຊ່ຽວຊານ. ຢ່າງໃດກໍຕາມ, ເທັກໂນໂລຊີ AI ບໍ່ສາມາດຮັບປະກັນໄດ້ວ່າຈະກວດພົບຊ່ອງໂຫວ່ທັງໝົດ, ດັ່ງນັ້ນຄວາມສຳເລັດຈຶ່ງຂຶ້ນຢູ່ກັບການປະສານງານລະຫວ່າງໜ່ວຍງານ, ຄວາມວ່ອງໄວໃນການຕອບສະໜອງ ແລະ ປະສິດທິພາບຂອງລະບົບປ້ອງກັນທີ່ນຳມາໃຊ້ງານຈິງ.

ແຫຼ່ງຂໍ້ມູນ: Reuters

ຂ່າວຕ່າງປະເທດ · 13:45 ໂມງ · ອ່ານ 6 ຄັ້ງ

ໄຟໄໝ້ອະພາດເມັ້ນສູງໃນຈີນ ກາງເມືອງໄທ່ຢວນ ເສຍຊີວິດຈຳນວນ 14 ເຈັບກວ່າ 30 ລາຍ



ເກີດເຫດເພີງໄໝ້ຄັ້ງໃຫຍ່ໃນອາຄານທີ່ພັກອາໄສສູງໃນເມືອງໄທ່ຢວນ ແຂວງຊານຊີ ປະເທດຈີນ ສົ່ງຜົນໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 14 ລາຍ ແລະ ບາດເຈັບກວ່າ 30 ລາຍ ຂະນະທີ່ທາງການເລັ່ງສອບສວນຫາສາເຫດ. ດ້ານໂຊຊຽວແຫ່ຊົມເຊີຍຣີໂອ້ ພາgroupຜູ້ຕິດຄ້າງ 6 ຊີວິດພັ້ງມຸ້ງ ລວດໜີອອກມາລໍຖ້າຢູ່ເທິງລະບຽງ ຣອດຊີວິດມາໄດ້ຢ່າງປາຕິຫານ.

ເກີດເຫດເພີງໄໝ້ອາຄານ ຫ່າວເຊີງ ອິນເຕີເນຊັນແນລ ອະພາດເມັ້ນ (Haosheng International Apartment) ໃນເຂດອີ່ງເຈ໋ອ ເມືອງໄທ່ຢວນ ແຂວງຊານຊີ ທາງຕອນເໜືອຂອງຈີນ ເມື່ອຊ່ວງແລງວັນອາທິດທີ 8 ພະຈິກ ສົ່ງຜົນໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 14 ຄົນ ແລະ ມີຜູ້ໄດ້ຮັບບາດເຈັບຈຳນວນຫຼາຍ ໂດຍມີຜູ້ຖືກນຳຕົວສົ່ງໂຮງໝໍ 38 ຄົນ ກ່ອນທີ່ເຈົ້າໜ້າທີ່ຈະຢືນຢັນຍອດຜູ້ເສຍຊີວິດເພີ່ມຂຶ້ນໃນເຊົ້າວັນຈັນ.

ສຳນັກຂ່າວຊິນຫົວລາຍງານວ່າ ເພີງໄໝ້ເກີດຂຶ້ນເມື່ອເວລາປະມານ 16:59 ໂມງ ແລະ ເຈົ້າໜ້າສາມາດຄວບຄຸມເພີງໄດ້ໃນຊ່ວງຄ່ຳວັນດຽວກັນ ກ່ອນເສັດສິ້ນພາລະກິດຄົ້ນຫາແລະຊ່ວຍເຫຼືອຜູ້ປະສົບໄພ ຂະນະທີ່ສາເຫດຂອງເພີງໄໝ້ແມ່ນຢູ່ລະຫວ່າງການສອບສວນ.

ອາຄານດັ່ງກ່າວສ້າງຂຶ້ນເມື່ອປີ 2007 ຕັ້ງຢູ່ໃນຍ່ານການຄ້າຫຼີວຊຽງ ເປັນອາຄານສູງທີ່ມີທັງສະຖາບັນການສຶກສາ ແລະ ຫ້ອງພັກໂຮງແຮມ ໂດຍຊັ້ນລຸ່ມສ່ວນໃຫຍ່ເປັນສະຖາບັນກວດວິຊາ ສ່ວນຊັ້ນເທິງເປັນຫ້ອງພັກໂຮງແຮມ ແລະ ມີຊື່ຮຽກໃນທ້ອງຖິ່ນວ່າ "ຕຶກທອງຄຳ" ເນື່ອງຈາກຕົວອາຄານມີສີທອງ.

ຜູ້ລອດຊີວິດລາຍໜຶ່ງຊື່ວ່າ ຫຼານ ເລົ່າວ່າ ລາວໄດ້ເຂົ້າພັກໃນໂຮງແຮມຊັ້ນ 8 ຂອງອາຄານ ກ່ອນຈະໄດ້ກິ່ນໄໝ້ແລະເຫັນຄວັນໄຟໄຫຼເຂົ້າມາໃນຫ້ອງ ຈຶ່ງຟ້າວອອກໄປກວດເບິ່ງ ແຕ່ພົບວ່າທາງຍ່າງເຕັມໄປດ້ວຍຄວັນໜາທຶບ ຈົນແທບແນມບໍ່ເຫັນເສັ້ນທາງ.

ລາວຕັດສິນໃຈພາຜູ້ຕິດຄ້າງອີກ 6 ຄົນ ເຊິ່ງລວມມີພະນັກງານທຳຄວາມສະອາດ ແລະ ຄູ່ຮັກໜຸ່ມສາວ ໜີອອກທາງປ່ອງຢ້ຽມໄປຍັງລະບຽງທາງແຈ້ງ ຫຼັງຈາກພົບວ່າບັນໄດໜີໄຟເຕັມໄປດ້ວຍຄວັນແລະຄວາມຮ້ອນສູງ ຈາກນັ້ນໃຊ້ຜ້າປຽກອັດປາກແລະດັງ ພ້ອມໃຫ້ທຸກຄົນໝອບຕ່ຳເພື່ອຫຼີກເວັ້ນຄວັນໄຟ.

ຜູ້ຕິດຄ້າງທັ້ງ 7 ຄົນລໍຖ້າຢູ່ເທິງລະບຽງດົນກວ່າ 40 ນາທີ ກ່ອນເຈົ້າໜ້າທີ່ດັບເພີງຈະໃຊ້ລົດກະເຊົ້າເຂົ້າມາຊ່ວຍເຫຼືອ ໂດຍລາວຢືນຢັນໃຫ້ຜູ້ຍິງແລະຜູ້ສູງອາຍຸໄດ້ຮັບການຊ່ວຍເຫຼືອກ່ອນ ແລະ ເປັນຄົນສຸດທ້າຍທີ່ລົງມາຈາກອາຄານ.

ລາວລະບຸວ່າ ໃນລະຫວ່າງລໍຖ້າການຊ່ວຍເຫຼືອ ໄດ້ພະຍາຍາມສັງເກດທິດທາງລົມ ແລະ ຕຳແໜ່ງທີ່ມີຄວັນໜ້ອຍ ພ້ອມທັງປອບໃຈຜູ້ຕິດຄ້າງບໍ່ໃຫ້ຕື່ນຕົກໃຈ ແລະ ຮັກສາແບັດເຕີຣີໂທລະສັບໄວ້ສຳລັບຕິດຕໍ່ຄອບຄົວ.

ເຫດການນີ້ເຮັດໃຫ້ເກີດຄຳຖາມກ່ຽວກັບມາດຕະການຄວາມປອດໄພໃນອາຄານ ໂດຍຜູ້ລອດຊີວິດລະບຸວ່າ ທ້ອງພັກມີເຄື່ອງກວດຈັບຄວັນແລະໄຟສຸກເສີນ ແຕ່ເຄື່ອງກວດຈັບຄວັນບໍ່ໄດ້ສົ່ງສັນຍານເຕືອນເມື່ອເກີດເຫດ.

ທັ້ງນີ້, ເຫດເພີງໄໝ້ຮ້າຍແຮງເກີດຂຶ້ນເລື້ອຍໆໃນຈີນ ໂດຍເມື່ອເດືອນພະຈິກປີຜ່ານມາ ໄຟໄໝ້ອາຄານສູງຫຼາຍແຫ່ງໃນຮົງກົງ ຄ່ຮ່ າມີຜູ້ເສຍຊີວິດ 168 ຄົນ ແລະ ໃນເດືອນຖັດມາ ເກີດເຫດໄຟໄໝ້ອາຄານທີ່ພັກອາໄສໃນແຂວງກວາງຕຸ້ງ ມີຜູ້ເສຍຊີວິດ 12 ຄົນ ຂະນະທີ່ເດືອນກໍລະກົດທີ່ຜ່ານມາ ໄຟໄໝ້ໂຮງງານເກີບໃນພາກຕາເວັນອອກຂອງຈີນ ຄ່ຮ່ າມີຜູ້ເສຍຊີວິດຢ່າງໜ້ອຍ 28 ຄົນ.

ທີ່ມາ: AFP

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ຂ່າວຕ່າງປະເທດ · 18:30 ໂມງ · ອ່ານ 3 ຄັ້ງ

ສະມາຊິກລັດຖະສະພາອາເມລິກາ ຢືນຢັນວ່າ ຈະຊຸກຍູ້ການຍົກເລີກນະໂຍບາຍພາສີທີ່ບໍ່ສົມເຫດສົມຜົນ



ວິທະຍຸ ໂທລະພາບ ສູນກາງຈີນ, ເນື່ອງຈາກ ປະຊາຊົນ ຜູ້ມີສິດເລືອກຕັ້ງໃນ ສ.ອາເມລິກາ ມີປະຕິກິລິຍາ ຮຸນແຮງຕໍ່ຄ່າຄອງຊີບ ແລະໄພເງິນເຟີ້ ທີ່ສູງຂຶ້ນ, ໄປຄຽງຄູ່ກັບ ພັກເດໂມແຄຣັດ ໄດ້ຮັບໄຊຊະນະ ຢ່າງຖ້ວມທົ້ນ ໃນການ ເລືອກຕັ້ງກາງສະໄໝ ຂອງສະຫະລັດ ອາເມລິກາ, ສະມາຊິກລັດຖະສະພາ ທີ່ຂຶ້ນກັບ ພັກເດໂມແຄຣັດ ຫລາຍຄົນ ຢືນຢັນວ່າ:ຈະສຸມໃສ່ ຊຸກຍູ້ການຍົກເລີກ ນະໂຍບາຍພາສີ ທີ່ບໍ່ສົມເຫດສົມຜົນ ທີ່ປະຕິບັດ ໃນປັດຈຸບັນ. ຄຽງຄູ່ກັບ ການເລືອກຕັ້ງກາງສະໄໝ ຂອງ ສະຫະລັດ ອາເມລິກາ ໄດ້ສິ້ນສຸດລົງ, ແຕ່ວັນທີ 5-6 ພະຈິກນີ້, ພັກເດໂມແຄຣັດ ຂອງ ສະຫະລັດ ອາເມລິກາ ໄດ້ເປີດເຜີຍວຽກງານຈຸດສຸມ ຂອງລັດຖະສະພາຊຸດໃໝ່ ຕາມລໍາດັບ, ນັບແຕ່ ງົບປະມານ ຂອງລັດຖະບານ, ການຕິດຕາມຄຸ້ມຄອງ ປັນຍາປະດິດຕະຫຼອດຮອດນະໂຍບາຍ ພາສີ ແລະ ການຄ້າ, ຄວາມຂັດແຍ້ງກັນ ລະຫວ່າງ ສອງພັກຂອງ ສະຫະລັດ ອາເມລິກາ ໃນຫລາຍຂົງເຂດ ໄດ້ຖືກເຜີຍແຜ່ອອກ ເທື່ອລະໜ້ອຍ, ການຄາດຄະເນການປັບປຸງນະໂຍບາຍທີ່ເກີດຈາກການປ່ຽນແປງ ດ້ານສະພາບອໍານາດ ໃນລັດຖະສະພາ ເລີ່ມປາກົດອອກ ຢ່າງເດັ່ນຊັດ. ນັກວິເຄາະເຫັນວ່າ: ພາຍຫລັງ ໄດ້ຮັບຄະແນນສຽງອໍານາດ ສ່ວນໃຫຍ່ ໃນສະພາສູງ ແລະ ສະພາຕ່ໍາ ແລ້ວ, ພັກເດໂມແຄຣັດ ອາດຈະຜ່ານຈາກ ຄະນະກໍາມະການ ທີ່ກ່ຽວຂ້ອງ ເພື່ອ ເພີ່ມທະວີ ການຕິດຕາມກວດກາ ນະໂຍບາຍພາສີພ້ອມທັງ ຊຸກຍູ້ການຍົກເລີກພາສີ ສ່ວນໜຶ່ງລວມທັງ ການສ້າງກົດໝາຍກ່ຽວ ກັບ ການມອບສິດ ທີ່ກ່ຽວຂ້ອງ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

◆ ຂ່າວຕ່າງປະເທດ · 23:39 ໂມງ · ອ່ານ 2 ຄັ້ງ

ກອງປະຊຸມເວທີປຶກສາຫາລືກ່ຽວກັບ ທ່າອຽງການຮ່ວມມື ດ້ານເສດຖະກິດພາກພື້ນ APEC ປີ 2026



ວິທະຍຸ ໂທລະພາບ ສູນກາງຈີນ, ກອງປະຊຸມ ເວທີ ປຶກສາຫາລື ກ່ຽວກັບ ທ່າອຽງການຮ່ວມມື ດ້ານເສດຖະກິດພາກພື້ນ ຂອງອົງການຮ່ວມມື ເສດຖະກິດອາຊີ-ປາຊີຟິກຫລື APEC ປີ 2026 ໄດ້ຈັດຂຶ້ນເມື່ອບໍ່ດົນມານີ້ ຢູ່ ນະຄອນຫລວງກົວລາລໍາເປີປະເທດ ມາເລເຊຍ.ກອງປະຊຸມຄັ້ງນີ້ ຈັດຂຶ້ນໂດຍສະໂມສອນ ເພື່ອນມິດເສັ້ນທາງສາຍໄໝ ມາເລເຊຍ, ໂດຍມີ ຜູ້ຕາງໜ້າລັດຖະບານ ແລະ ນັກວິຊາການຈາກ ສປ ຈີນ ແລະ ມາເລເຊຍ 200 ກວ່າຄົນ ເຂົ້າຮ່ວມ.ທ່ານ ນຸ ຈາລານ ບິນ ໂມຮາເມັດຮອງປະທານ ສະພາສູງ ຂອງມາເລເຊຍ ໄດ້ກ່າວຄໍາປາໄສໂດຍສະແດງ ຄວາມຫວັງທີ່ຈະຊຸກຍູ້ການສ້າງຂອບ ການຮ່ວມມື ທີ່ເນັ້ນໃສ່ ການປະຕິບັດຕົວຈິງແລະ ມຸ່ງໜ້າສູ່ອະນາຄົດເພື່ອສ້າງ ປະຊາຄົມ ອາຊີ-ປາຊີຟິກ ທີ່ມີຄວາມເຂັ້ມແຂງ.ມາເລເຊຍ ພວມສຸມກໍາລັງສ້າງ ເປັນສູນກາງລະດັບພາກພື້ນ ທີ່ມີການ ລົງທຶນມູນຄ່າສູງ, ມີຕ່ອງໂສ້ມູນຄ່າ ອັດສະດຸເຄິ່ງຕົວນໍາ ຫລື ເຊມິຕອນດັກເຕີ, ພະລັງງານສີຂຽວ ແລະ ເສດຖະກິດີຈິຕອນ, ພ້ອມນີ້ທ່ານຍັງສະແດງຄວາມ ຫວັງ ທີ່ຈະລົງເລິກການຮ່ວມມື ໃນຂົງເຂດຕ່າງໆກັບ ສປ ຈີນ.ທ່ານ ກົ່ວເສີນທ່າ ອັຍກະລັດຖະທູດຈີນ ປະຈໍາມາເລເຊຍ ໄດ້ນໍາສະເໜີ ການອອກແບບ ໂດຍລວມ ຂອງ “ປີຈີນ” ຂອງ APEC, ການກະກຽມວຽກງານ ແລະ ຄວາມຄືບໜ້າຫລ້າສຸດ, ພ້ອມທັງ ກ່າວວ່າ:ສປ ຈີນ ຄອງຄອຍ ທີ່ຈະຮ່ວມກັບ ມາເລເຊຍ ເພື່ອລົງເລິກ ການຮ່ວມມື ໃນພາກພື້ນແລະ ຮ່ວມກັນ ສ້າງປະຊາຄົມ APEC./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

◆ ຂ່າວຕ່າງປະເທດ · 18:37 ໂມງ · ອ່ານ 2 ຄັ້ງ

ທ່ານ ໂຕເລີມ ເລຂາທິການໃຫຍ່, ປະທານປະເທດ ຫວຽດນາມ ເດີນທາງໄປຢ້ຽມຢາມ ຍີ່ປຸ່ນ ຢ່າງເປັນທາງການ




ວິທະຍຸກະຈ່າຍສຽງ ຫວຽດນາມ, ທ່ານ ໂຕເລີມ, ເລຂາທິການໃຫຍ່ ຄະນະບໍລິຫານງານ ສູນກາງພັກ ກອມມຸນິດ ຫວຽດນາມ, ປະທານປະເທດ ຫວຽດນາມ ແລະ ພັນລະຍາ ພ້ອມດ້ວຍ ຄະນະຜູ້ແທນຂັ້ນສູງ ຫວຽດນາມໄດ້ເດີນທາງອອກຈາກ ຮ່າໂນ້ຍ ເລີ່ມຕົ້ນ ການ ຢ້ຽມຢາມ ຍີ່ປຸ່ນ ຢ່າງເປັນທາງການລະຫວ່າງ ວັນທີ 08-11 ພະຈິກນີ້ ຕາມຄໍາເຊີນ ຂອງລັດຖະບານ ຍີ່ປຸ່ນ.ການຢ້ຽມຢາມ ດໍາເນີນໄປ ໃນຈຸດເວລາທີ່ ທັງສອງ ປະເທດພວມຍືນຢູ່ ບັນດາຄວາມຮຽກຮ້ອງ ພັດທະນາ ໃໝ່. ຫວຽດນາມພວມຍູ້ແຮງ ການຫັນ ເປັນ ອຸດສາຫະກໍາ, ທັນສະໄໝ, ມຸ່ງໄປສູ່ສອງເປົ້າໝາຍ ພັດທະນາ 100 ປີໃນປີ 2030 ແລະ 2045. ຍີ່ປຸ່ນກໍ່ພວມ ຊຸກຍູ້ບັນດາກໍາລັງໝູນເຕີບໂຕໃໝ່, ຕິດພັນການ ພັດທະນາເສດຖະກິດກັບວິທະຍາສາດ-ເຕັກໂນໂລຊີ, ຍົກ ສູງກໍາລັງແຮງ ແຫ່ງຊາດ ແລະຟື້ນຟູທີ່ຕັ້ງນໍາໜ້າ ໃນບັນດາ ຂົງເຂດ ເສດຖະກິດ, ເຕັກໂນໂລຊີ ຫລັກແຫລ່ງ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 18:08 ໂມງ · ອ່ານ 2 ຄັ້ງ

ລັດເຊຍ-ສ.ອາເມລິກາ-ອູແກຣນ ຈະຈັດການເຈລະຈາ 3 ຝ່າຍ



ວິທະຍຸ ໂທລະພາບ ສູນກາງຈີນ, ທ່ານ ອະລາດີເມຍ ປູຕິນປະທານາທິບໍດີລັດເຊຍ ໄດ້ຢືນຢັນ ໃນກອງປະຊຸມວ່າ: ການເຈລະຈາ 3 ຝ່າຍ ລັດເຊຍ-ສ.ອາເມລິກາ-ອູແກຣນ ກ່ຽວກັບບັນຫາອູແກຣນຈະຈັດຂຶ້ນໃນວັນທີ 10 ພະຈິກນີ້ ຢູ່ນະຄອນຫລວງ ອາບູດາບີ ຂອງສະຫະລັດ ອາຣັບ ເອມິເຣດ. ທ່ານ ອາລາດີເມຍ ປູຕິນ ກ່າວວ່າ:ສະມາຊິກຄະນະຜູ້ແທນ ລັດເຊຍ ໄດ້ເຂົ້າຮ່ວມ ກອງປະຊຸມ ຄວາມໝັ້ນຄົງ ສະຫະພັນ ລັດເຊຍ ໃນມື້ດຽວກັນ.ຜູ້ເຂົ້າຮ່ວມລວມມີ ທ່ານ ອະລາດີເມຍ ເມດີນສະກີ ຜູ້ຊ່ວຍປະທານາທິບໍດີ ລັດເຊຍ, ທ່ານ ມິຄາອິລ ກາລູຊິນ ແລະ ທ່ານ ເຊີເກຣີຢາບຄົຟ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ລັດເຊຍ ແລະ ອື່ນໆ.ກອງປະຊຸມ ໄດ້ປຶກສາຫາລື ກ່ຽວກັບ ບັນຫາທີ່ກ່ຽວຂ້ອງກັບ ການເຈລະຈາ 3 ຝ່າຍ ລັດເຊຍ-ສ.ອາເມລິກາ-ອູແກຣນ ທີ່ຈະຈັດຂຶ້ນໃນໄວໆນີ້. ທ່ານອະລາດີເມຍ ປູຕິນໄດ້ສະແດງຄວາມຂອບໃຈ ຕໍ່ຄວາມພະຍາຍາມ ຂອງຄະນະນຳສະຫະລັດ ອາຣັບ ເອມິເຣດ ໃນການຊຸກຍູ້ ການແກ້ໄຂວິກິດການໃນອູແກຣນ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 18:00 ໂມງ · ອ່ານ 2 ຄັ້ງ

ສປ ຈີນ ຈັດກອງປະຊຸມສຸດຍອດສື່ມວນຊົນໂລກ ຄັ້ງທີ 7



ວິທະຍຸ ໂທລະພາບ ສູນກາງຈີນ, ວັນທີ 7 ພະຈິກ ນີ້, ກອງປະຊຸມສຸດຍອດ ສື່ມວນຊົນໂລກ ຄັ້ງທີ 7 ໄດ້ໄຂຂຶ້ນຢູ່ນະຄອນຫລວງປັກກິ່ງຂອງ ສປ ຈີນ. ທ່ານ ຫລີ່ຊູເຕ ລິຍກຳມະການກົມການເມືອງສູນກາງພັກ ກອມມູນິດຈີນ, ຫົວໜ້າຄະນະໂຄສະນາອົບຮົມ ສູນກາງພັກກອມມູນິດຈີນ ໄດ້ເຂົ້າຮ່ວມ. ກອງປະຊຸມສຸດຍອດ ສື່ມວນຊົນໂລກ ຄັ້ງນີ້ ຈັດຂຶ້ນລະຫວ່າງ ວັນທີ 5 ຫາ 9 ພະຈິກນີ້ ຢູ່ນະຄອນຫລວງປັກກິ່ງ, ພາຍໃຕ້ຫົວຂໍ້ “ພາລະໜ້າທີ່ ແລະ ການຮ່ວມມື ຂອງສື່ມວນຊົນ ໃນທ່າມກາງການຫັນປ່ຽນໄປສູ່ອັດສະລິຍະ”, ໂດຍມີຜູ້ຕາງໜ້າ ເກືອບ 500 ຄົນ ຈາກສື່ຫລັກ, ຄັງປັນຍາ, ພາກສ່ວນລັດຖະບານ, ອົງການສະຫະປະຊາຊາດ ແລະອົງການຈັດຕັ້ງສາກົນອື່ນໆ ເກືອບ 330 ແຫ່ງທີ່ມາຈາກ 112 ປະເທດ ແລະເຂດແຄວ້ນທົ່ວໂລກ ເຂົ້າຮ່ວມ. ບັນດາແຂກຜູ້ເຂົ້າຮ່ວມໄດ້ລົງເລິກ ປຶກສາຫາລື ຫົວຂໍ້ຕ່າງໆເຊັ່ນ:ສື່ມວນຊົນ ຈະປັບຕົວເຂົ້າກັບ ການປ່ຽນແປງ ອັນເລິກເຊິ່ງຂອງສະພາບແວດລ້ອມ ທາງຫາງສຽງ, ຊຸກຍູ້ການຫັນປ່ຽນ ແລະ ການພັດທະນາ ຂອງສື່ມວນຊົນໂລກ ໄດ້ຄືແນວໃດແລະ ຈະເສີມຂະຫຍາຍ ທ່າແຮງສະເພາະ ຂອງສື່ມວນຊົນເພື່ອປັບປຸງການຄຸ້ມຄອງ ປັນຍາ ປະດິດທົ່ວໂລກໃຫ້ດີຂຶ້ນ ຢ່າງຕໍ່ເນື່ອງໄດ້ຄືແນວໃດ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ
ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ

EMERGING DIGITAL SOLUTIONS

ແນວຄິດ → ອອກແບບ → ເປີດໃຊ້ງານ

ຮັບອອກແບບ ແລະ ພັດທະນາ ເວັບໄຊທ໌ · ແອັບ · ລະບົບທຸລະກິດ

ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ

ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້



ຢາກມີລະບົບ ເປັນຂອງຕົວເອງບໍ? ເຮົາສ້າງໃຫ້

ສິ່ງທີ່ພວກເຮົາສ້າງໃຫ້ທ່ານ

- ເວັບໄຊທ໌ທຸລະກິດ
- ເວັບແອັບ
- ແອັບມືຖື
- ຮ້ານຄ້າອອນລາຍ
- ລະບົບ CRM
- ລະບົບ ERP
- ປລັກອິນ & API
- ໂຊລູຊັນ AI

ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ

020 58886182

← ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ວັນອັງຄານ 10 ພະຈິກ 2026 · ສະບັບທີ 018

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບູລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

10/11	★	ເດືອນ 12
17/11	🛕	ວັນພຣະ
24/11	🛕	ວັນພຣະ · ບຸນນະມັດສະການ ພຣະທາດຫຼວງວຽງຈັນ
02/12	🛕	ວັນສະຖາປະນາ ສປປ ລາວ · ວັນພຣະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 09/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,281	▲ 22,624
THB ບາດ ໄທ	▲ 667.38	▲ 680.64
CNY ຢວນ ຈີນ	▼ 3,330	▼ 3,396
EUR ເອີໂຣ	▼ 24,901	▼ 25,391
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▼ 140.81	▼ 143.62
SGD ໂດລາ ສິງກະໂປ	▲ 17,071	▲ 17,752
GBP ປອນ ອັງກິດ	▼ 29,720	▼ 30,307

ສະເລ່ຍທະນາຄານ (ທຫລ): USD ຊື້ 22,400 · ຂາຍ 22,623 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳແທ່ງ 1 ບາດ

45,550,000

▲ 220,000

ຄຳແທ່ງ 99.99% · 1 ກຣາມ

3,020,600

▲ 20,000

ອັບເດດ 10/11 05:30 · mahaxan.com/today/gold

ຫວຍພັດທະນາ

ງວດ 192

ອອກວັນທີ 09/11/2026

337038

ງວດ 191 · 06/11	808098
ງວດ 190 · 05/11	124079
ງວດ 189 · 04/11	048808
ງວດ 188 · 03/11	145713

ພະຍາກອນອາກາດ

ວັນອັງຄານ 10 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	18.7–26.5°C	⛅ ເມກບາງສ່ວນ
ຫຼວງພະບາງ	17.6–21.9°C	🌧 ຝົນຕົກໜັກ
ໂພນສະຫວັນ	11.3–22.6°C	⛅ ເມກບາງສ່ວນ
ຊຳເໜືອ	10.2–20.0°C	⛅ ເມກບາງສ່ວນ
ສະຫວັນນະເຂດ	17.9–26.7°C	⛅ ເມກບາງສ່ວນ
ປາກເຊ	22.0–28.9°C	🌦 ມີຝົນ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນຈັນ 9 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.